EY

Building a better working world

# ທະນາຄານ ເມແບັງ ສາຂາລາວ

ເອກະສານລາຍງານການເງິນ

ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

# ທະນາຄານ ເມແບັງ ສາຂາລາວ

## ສາລະບານ

*ໜ້າ*


| | |
|---|---|
| ຂໍ້ມູນທົ່ວໄປ | 1 |
| ບົດລາຍງານຂອງຄະນະບໍລິຫານ | 2 |
| ບົດລາຍງານຂອງນັກກວດສອບອິດສະຫຼະ | 3 - 5 |
| ໃບລາຍງານຜົນການດຳເນີນງານ | 6 - 7 |
| ໃບລາຍງານຖານະການເງິນ | 8 - 10 |
| ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ | 11 |
| ໃບລາຍງານກະແສເງິນສົດ | 12 - 13 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 14 - 40 |

## ທະນາຄານ ເມແບັງ ສາຂາລາວ

ຂໍ້ມູນທົ່ວໄປ

### ສາຂາ

ທະນາຄານ ເມແບັງ ສາຂາລາວ ("ສາຂາ") ແມ່ນສາຂາ ທີ່ໄດ້ສ້າງຕັ້ງໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ") ຂອງ ທະນາຄານ ມາເລຍັນ ເບີຫັດ, ທະນາຄານທີ່ຈົດທະບຽນໃນປະເທດມາເລເຊຍ. ສາຂາໄດ້ດໍາເນີນງານພາຍໃຕ້ໃບອະນຸຍາດດໍາເນີນທຸລະກິດເລກທີ 35/ທຫລ ອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 26 ຕຸລາ 2012 ແລະ ໃບອະນຸຍາດດໍາເນີນທຸລະກິດສະບັບປັບປຸງຄັ້ງທີສອງ ເລກທີ 18/ທຫລ ລົງວັນທີ 19 ພະຈິກ 2018.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 100,661,400,000 ກີບ. ເງິນທຶນຈົດທະບຽນທີ່ຖອກແລ້ວຕົວຈິງ ນະວັນທີ 31 ທັນວາ 2023 ແມ່ນ 200,783,129,000 ກີບ (31 ທັນວາ 2022: 200,783,129,000 ກີບ).

ກິດຈະກໍາຫຼັກຂອງສາຂາແມ່ນ ສະໜອງທຸກການບໍລິການດ້ານການທະນາຄານ ແລະ ການບໍລິການດ້ານການເງິນທີ່ກ່ຽວຂ້ອງໃນ ສປປ ລາວ.

ສາຂາຕັ້ງຢູ່ບ້ານເລກທີ 43, 45, 47 ຖະໜົນ ລ້ານຊ້າງ, ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

### ຄະນະບໍລິຫານ

ສະມາຊິກຂອງຄະນະບໍລິຫານພາຍໃນປີ ແລະ ນະມື້ອອກບົດລາຍງານສະບັບນີ້ປະກອບດ້ວຍ:

| *ຊື່* | *ຕໍາແໜ່ງ* | *ວັນທີແຕ່ງຕັ້ງ* |
|---|---|---|
| ທ່ານ Tan Tee Huat | ຜູ້ອໍານວຍການໃຫຍ່ | ແຕ່ງຕັ້ງວັນທີ 12 ມີນາ 2019 |
| ທ່ານ ນາງ ແພງສົມຈິດ ພົນໂພສີ | ຮອງຜູ້ອໍານວຍການໃຫຍ່ | ແຕ່ງຕັ້ງວັນທີ 1 ມັງກອນ 2020 |
| ທ່ານ ນາງ ອໍາໄພວັນ ເມືອງທານ | ຫົວໜ້າພະແນກບໍລິການ | ແຕ່ງຕັ້ງວັນທີ 1 ເມສາ 2018 |
| ທ່ານ ສິດທິພົນ ສີສຸດາຈັນ | ຫົວໜ້າພະແນກການເງິນ | ແຕ່ງຕັ້ງວັນທີ 28 ພຶດສະພາ 2018 |
| ທ່ານ ເພັດທະນູສອນ ໄຊຍະຣາດ | ຫົວໜ້າພະແນກພັດທະນາທຸລະກິດ | ແຕ່ງຕັ້ງວັນທີ 1 ພະຈິກ 2018 |
| ທ່ານ ແກ້ວໃຈ ໄມຍະວົງສີ | ຫົວໜ້າພະແນກສິນເຊື່ອ | ແຕ່ງຕັ້ງວັນທີ 1 ມັງກອນ 2017 |

### ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງສາຂາພາຍໃນປີສິ້ນສຸດວັນທີ 31 ທັນວາ 2023 ແລະ ນະວັນທີອອກເອກະສານລາຍງານສະບັບນີ້ແມ່ນ ທ່ານ Tan Tee Huat – ຜູ້ອໍານວຍການໃຫຍ່.

### ຜູ້ກວດສອບ

ຜູ້ກວດສອບບັນຊີຂອງສາຂາແມ່ນ ບໍລິສັດ ເອີນແອນຢັງ ລາວ ຈໍາກັດ.

## ທະນາຄານ ເມແບັງ ສາຂາລາວ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງທະນາຄານ ເມແບັງ ສາຂາລາວ ("ສາຂາ") ມີຄວາມຍິນດີໃນການນຳສະເໜີບົດລາຍງານສະບັບນີ້ ແລະ ເອກະສານລາຍງານການເງິນຂອງສາຂາ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023.

**ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ**

ຄະນະບໍລິຫານຂອງສາຂາມີໜ້າທີ່ຮັບຜິດຊອບຕໍ່ການກະກຽມເອກະສານລາຍງານການເງິນຂອງແຕ່ລະປີການບັນຊີທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງຂອງຖານະທາງການເງິນຂອງສາຂາ ແລະ ຜົນປະກອບການ ແລະ ກະແສເງິນສົດພາຍໃນປີ. ໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນດັ່ງກ່າວ, ຄະນະບໍລິຫານຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນນະໂຍບາຍດ້ານການບັນຊີທີ່ເໝາະສົມ ແລະ ຈັດຕັ້ງປະຕິບັດຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນຕໍ່ການປະຕິບັດຕໍ່ມາດຕະຖານການບັນຊີຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ກະກຽມເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນແຕ່ທາງສາຂາຫາກຕັ້ງຂໍ້ສົມມຸດຕິຖານ ຫຼື ຄາດຄະເນວ່າສາຂາບໍ່ສາມາດທີ່ຈະດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານ ມີໜ້າທີ່ຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງເຊິ່ງໄດ້ເປີດເຜີຍຖານະການເງິນຂອງສາຂາຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ນອກຈາກນັ້ນ, ຄະນະບໍລິຫານຍັງຕ້ອງຮັບຜິດຊອບຕໍ່ການຮັກສາຊັບສົມບັດຄົງທີ່ຂອງສາຂາ ແລະ ຮັບປະກັນວ່າສາຂາມີຂັ້ນຕອນການກວດສອບທີ່ເໝາະສົມ ເພື່ອປ້ອງກັນ ແລະ ຊອກຫາການສໍ້ໂກງ ຫຼື ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານໄດ້ຢັ້ງຢືນວ່າ ສາຂາໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນທີ່ກ່ຽວຂ້ອງ.

**ຖະແຫຼງການຂອງຄະນະບໍລິຫານ**

ຄະນະບໍລິຫານມີຄວາມຍິນດີຖະແຫຼງວ່າ ເອກະສານລາຍງານການເງິນໄດ້ຖືກກະກຽມຢ່າງຖືກຕ້ອງຕາມຄວາມເປັນຈິງ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ບັນດາລະບຽບການທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

ທ່ານ. Tan Tee Huat
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

11 ເມສາ 2024

EY
Building a better working world

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

ເລກທີອ້າງອີງ: 11914068/67958323-LAS

# ບົດລາຍງານຂອງນັກກວດສອບອິດສະຫຼະ

**ຮຽນ: ຄະນະບໍລິຫານຂອງ ທະນາຄານ ເມແບັງ ສາຂາລາວ**

*ຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງທະນາຄານ ເມແບັງ ສາຂາລາວ (“ສາຂາ”), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2023, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງສາຂາໄດ້ຖືກກະກຽມຢ່າງຖືກຕ້ອງໂດຍສອດຄ່ອງກັບກົດໝາຍບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

*ພື້ນຖານການອອກຄຳເຫັນ*

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ (ISA). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ພາຍໃຕ້ມາດຕະຖານສາກົນດັ່ງກ່າວແມ່ນໄດ້ຖືກອະທິບາຍເພີ່ມເຕີມໃນວັກ *ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ* ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກທະນາຄານໂດຍສອດຄ່ອງກັບຈັນຍາບັນຂອງນັກວິຊາຊີບບັນຊີຂອງ ສະພານັກບັນຊີສາກົນວ່າດ້ວຍມາດຕະຖານຂໍ້ບັງຄັບດ້ານຈັນຍາບັນ (IESBA Code) ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆ ໂດຍສອດຄ່ອງກັບ ກົດຈັນຍາບັນຂອງ ສະພານັກບັນຊີສາກົນ. ພວກຂ້າພະເຈົ້າເຊື່ອວ່າ ຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

*ບັນຫາທີ່ຄວນເອົາໃຈໃສ່ – ພື້ນຖານການບັນຊີ*

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍສາຂາ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງສາຂາ ໂດຍສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ. ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.



A member firm of Ernst & Young Global Limited

Building a better
working world

*ຄວາມຮັບຜິດຊອບຂອງຄະນະບໍລິຫານສາຂາຕໍ່ເອກະສານລາຍງານການເງິນ*

ຄະນະບໍລິຫານສາຂາແມ່ນມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆ ທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ແລະ ສຳລັບບັນດາການຄວບຄຸມພາຍໃນທີ່ກ່ຽວຂ້ອງທີ່ທາງຄະນະບໍລິຫານ ເຫັນວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.

ໃນການກະກຽມເອກະສານລາຍງານການເງິນ, ຄະນະບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງສາຂາທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ລວມທັງການເປີດເຜີຍບັນຫາຕ່າງໆທີ່ກ່ຽວຂ້ອງກັບຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ນຳໃຊ້ພື້ນຖານການບັນຊີທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດຈົນກວ່າທີ່ທາງຄະນະບໍລິຫານສາຂາຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະບໍລິຫານສາຂາມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

*ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ*

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າ ແມ່ນເພື່ອຮັບປະກັນການຮັບປະກັນທີ່ສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ແລະ ເພື່ອການອອກບົດລາຍງານຂອງນັກກວດສອບອິດສະຫຼະທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າ. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງແຕ່ບໍ່ໄດ້ຮັບປະກັນວ່າການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າສຳຄັນຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ, ເຊິ່ງສາມາດຄາດຄະເນວ່າ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ພື້ນຖານຂອງເອກະສານລາຍງານການເງິນສະບັບນີ້.

ໃນການກວດສອບໂດຍສອດຄ່ອງກັບມາດຕະຖານສາກົນດ້ານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼືລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງສາຂາ.
- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະບໍລິຫານ.



A member firm of Ernst & Young Global Limited

Building a better
working world

- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດຂອງຄະນະບໍລິຫານ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງສາຂາ ໃນການສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນເພື່ອສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ສາຂາຢຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະບໍລິຫານຂອງສາຂາກ່ຽວກັບບັນດາບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ຄົ້ນພົບທາງການກວດສອບທີ່ສຳຄັນປະກອບມີບັນດາຂໍ້ບົກຜ່ອງທີ່ສຳຄັນໃດໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າໄດ້ກຳນົດໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ
ERNST & YOUNG LAO CO., LTD

Anh Hoang Trinh
ຂາຫຸ້ນ

ທະບຽນອະນຸຍາດດຳເນີນການກວດສອບ
ໃບຢັ້ງຢືນ ເລກທີ 011/LCPAA-APT-2018

ນະຄອນຫຼວງວຽງຈັນ, ສປປ ລາວ

11 ເມສາ 2024



A member firm of Ernst & Young Global Limited

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຜົນການດຳເນີນງານ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2023 ພັນກີບ* | *2022 ພັນກີບ* |
|---|---|---|---|---|
| **ກ** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| **1.** | **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **71,960,698** | **12,807,766** |
| **2.** | **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **(1,318,774)** | **(1,874,716)** |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **70,641,924** | **10,933,050** |
| **3** | **ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ** | **4** | **246,602** | **976,240** |
| **4** | **ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າ** | **4** | **(258,720)** | **(331,867)** |
| **5** | **ກຳໄລສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ** | | **3,689,969** | **3,999,454** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **74,319,775** | **15,576,877** |
| **ຂ** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **6** | **ລາຍຮັບອື່ນໆຈາກການດຳເນີນງານ** | **5** | **41,175,507** | **514,598** |
| **7** | **ລາຍຈ່າຍບໍລິຫານ** | | **(18,928,428)** | **(14,515,962)** |
| 7.1 | ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆໃຫ້ແກ່ພະນັກງານ | 6 | (13,399,633) | (10,567,481) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 7 | (5,528,795) | (3,948,481) |
| **8** | **ລາຍຈ່າຍຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມ** | | **(1,412,762)** | **(1,926,694)** |
| **9** | **ລາຍຈ່າຍອື່ນໆຈາກການດຳເນີນງານ** | **8** | **(71,155)** | **(859,000)** |

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຜົນການດຳເນີນງານ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

| *ລຳດັບ* | *ລາຍການ* | *ບົດອະທິບາຍ ເລກທີ* | *2023 ພັນກີບ* | *2022 ພັນກີບ* |
|---|---|---|---|---|
| **10** | (ຫັກ)/ເກັບຄືນ ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ | **13.2** | **(188,484)** | **24,680** |
| **III.** | ລວມກຳໄລ/(ຂາດທຶນ)ກ່ອນອາກອນ | | **94,894,453** | **(1,185,501)** |
| **11** | ອາກອນກຳໄລພາຍໃນປີ | **18.2** | **(17,409,975)** | **-** |
| **IV.** | ກຳໄລ/(ຂາດທຶນ)ຫຼັງຫັກອາກອນ | | **77,484,478** | **(1,185,501)** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ກວດຄືນໂດຍ:

ທ່ານ Tan Tee Huat
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

11 ເມສາ 2024

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຖານະການເງິນ
ນະວັນທີ 31 ທັນວາ 2023

| *ລຳດັບ* | *ຊັບສິນ* | *ບົດອະທິບາຍ ເລກທີ* | *31/12/2023 ພັນກີບ* | *31/12/2022 ພັນກີບ* |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")** | | **181,476,261** | **141,611,695** |
| 1 | ເງິນສົດໃນຄັງ | 9 | 6,309,546 | 3,899,811 |
| 2 | ເງິນຝາກຢູ່ ທຫລ | 10 | 175,166,715 | 137,711,884 |
| **II** | **ເງິນຝາກຢູ່ທະນາຄານອື່ນ** | | **72,124,009** | **35,139,004** |
| 1 | ເງິນຝາກກະແສລາຍວັນ | 11.1 | 5,013,325 | 3,628,234 |
| 2 | ເງິນຝາກມີກຳນົດ | 11.2 | 67,110,684 | 31,510,770 |
| **III** | **ການລົງທຶນໃນຫຼັກຊັບ** | | **36,400,000** | **11,400,000** |
| 1 | ຫຼັກຊັບຖືໄວ້ຈົນຄົບກຳນົດ | 12 | 36,400,000 | 11,400,000 |
| **IV** | **ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອສຸດທິ** | **13** | **81,348,974** | **138,854,127** |
| **V** | **ຊັບສົມບັດຄົງທີ່ ແລະ ສິດໃນການນຳໃຊ້ຊັບສິນ** | | **6,533,907** | **7,798,101** |
| 1 | ຊັບສົມບັດຄົງທີ່ມີຕົວຕົນ | 14.1 | 686,382 | 726,072 |
| 2 | ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 14.2 | 32,030 | 66,733 |
| 3 | ຊັບສົມບັດຄົງທີ່ພວມກໍ່ສ້າງ | 14.3 | 413,570 | 495,588 |
| 4 | ສິດໃນການນຳໃຊ້ຊັບສິນ | 14.4 | 5,401,925 | 6,509,708 |
| **VI** | **ຊັບສິນອື່ນໆ** | | **9,947,071** | **9,761,518** |
| 1 | ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | | 4,916,413 | 5,028,436 |
| 2 | ຊັບສິນອື່ນໆ | 15 | 5,030,658 | 4,733,082 |
| | **ລວມຊັບສິນ** | | **387,830,222** | **344,564,445** |

# ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2023

| ລຳດັບ | ໜີ້ສິນ ແລະ ທຶນ | ບົດອະທິບາຍ ເລກທີ | 31/12/2023 ພັນກີບ | 31/12/2022 ພັນກີບ |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງທະນາຄານ** | | **18,928,429** | **16,505,228** |
| 1 | ເງິນຝາກກະແສລາຍວັນ | 16.1 | 18,928,429 | 16,505,228 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **17** | **94,814,786** | **150,155,836** |
| 1 | ເງິນຝາກກະແສລາຍວັນ | | 30,136,350 | 20,616,446 |
| 2 | ເງິນຝາກປະຢັດ | | 41,587,590 | 30,746,487 |
| 3 | ເງິນຝາກມີກຳນົດ | | 20,720,194 | 25,576,268 |
| 4 | ໜີ້ຕ້ອງສົ່ງລູກຄ້າອື່ນໆ | | 2,370,652 | 73,216,635 |
| **III** | **ໜີ້ສິນອື່ນໆ** | | **32,815,469** | **14,023,242** |
| 1 | ດອກເບ້ຍຄ້າງຈ່າຍ | | 516,044 | 466,913 |
| 2 | ໜີ້ຕ້ອງສົ່ງອາກອນກຳໄລ | 18.1 | 17,409,975 | - |
| 3 | ໜີ້ຕ້ອງສົ່ງອື່ນໆ | 19 | 14,889,450 | 13,556,329 |
| | **ລວມໜີ້ສິນ** | | **146,558,684** | **180,684,306** |
| **IV** | **ທຶນ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | 20 | 200,783,129 | 200,783,129 |
| 2 | ຄັງແຮຕາມລະບຽບການ | | 13,382,413 | 5,633,965 |
| 3 | ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 13.2 | 391,343 | 484,422 |
| 4 | ກຳໄລ/(ຂາດທຶນ)ສະສົມ | | 26,714,653 | (43,021,377) |
| | **ລວມທຶນ** | | **241,271,538** | **163,880,139** |
| | **ລວມໜີ້ສິນ ແລະ ທຶນ** | | **387,830,222** | **344,564,445** |

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານຖານະການເງິນ (ຕໍ່)
ນະວັນທີ 31 ທັນວາ 2023

| *ລຳດັບ* | *ລາຍການນອກໃບລາຍງານຖານະການເງິນ* | *31/12/2023 ພັນກີບ* | *31/12/2022 ພັນກີບ* |
|---|---|---|---|
| **I** | **ຄຳໝັ້ນສັນຍາທີ່ໄດ້ໃຫ້** | | |
| 1 | ຄຳໝັ້ນສັນຍາສະໜອງທຶນໃຫ້ກັບລູກຄ້າ | 4,093,000 | 3,443,800 |
| | **ລວມຄຳໝັ້ນສັນຍາທີ່ໄດ້ໃຫ້** | **4,093,000** | **3,443,800** |
| **II** | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | | |
| **ກ** | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້** | **456,771,485** | **445,384,946** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບເງິນກູ້ຢືມແກ່ລູກຄ້າ | 456,771,485 | 445,384,946 |
| **ຂ** | **ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບໜັງສືຄ້ຳປະກັນ** | **4,093,000** | **3,443,800** |
| 1 | ຫຼັກຊັບຄ້ຳປະກັນ ແລະ ການຈຳນອງສຳລັບໜັງສືຄ້ຳປະກັນທີ່ອອກໃຫ້ແກ່ລູກຄ້າ | 4,093,000 | 3,443,800 |
| | **ລວມຫຼັກຊັບຄ້ຳປະກັນ ແລະ ການຈຳນອງ** | **460,864,485** | **448,828,746** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ກວດຄືນໂດຍ:

ທ່ານ Tan Tee Huat
ຜູ້ອຳນວຍການໃຫຍ່

ແຂວງ ສປປ ລາວ ທະນາຄານ ມາເລຍັນ ເບີຫັດ ສາຂາລາວ Malayan Banking Berhad Lao Branch ນະຄອນ ຫຼວງ ວຽງຈັນ

ນະຄອນຫຼວງວຽງຈັນ, ສປປ ລາວ

11 ເມສາ 2024

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ
ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

| *ລາຍການ* | *ທຶນຈົດທະບຽນທີ່ຖອກແລ້ວ*<br>*ພັນກີບ* | *ຄັງແຮຕາມລະບຽບການ*<br>*ພັນກີບ* | *ເງິນແຮທົ່ວໄປສໍາລັບກິດຈະກໍາສິນເຊື່ອ*<br>*ພັນກີບ* | *ກໍາໄລ/(ຂາດທຶນ) ສະສົມ*<br>*ພັນກີບ* | *ລວມ*<br>*ພັນກີບ* |
|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2023** | **200,783,129** | **5,633,965** | **484,422** | **(43,021,377)** | **163,880,139** |
| ກໍາໄລສຸດທິພາຍໃນປີ | - | - | - | 77,484,478 | 77,484,478 |
| ຄັງສະສົມຕາມລະບຽບການພາຍໃນປີ | - | 7,748,448 | - | (7,748,448) | - |
| ເງິນແຮທົ່ວໄປສໍາລັບໜີ້ປົກກະຕິທີ່ເກັບຄືນພາຍໃນປີ | - | - | (234,006) | - | (234,006) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | - | - | 140,927 | - | 140,927 |
| **ຍອດເຫຼືອນະວັນທີ 31 ທັນວາ 2023** | **200,783,129** | **13,382,413** | **391,343** | **26,714,653** | **241,271,538** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ກວດຄືນໂດຍ:

ທ່ານ Tan Tee Huat
ຜູ້ອໍານວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

11 ເມສາ 2024

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານກະແສເງິນສົດ
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

| *ລາຍການ* | *ບົດອະທິບາຍ ເລກທີ* | *2023 ພັນກີບ* | *2022 ພັນກີບ* |
|---|---|---|---|
| **ກຳໄລ/(ຂາດທຶນ)ກ່ອນຫັກອາກອນ** | | **94,894,453** | **(1,185,501)** |
| *ດັດແກ້ສຳລັບ:* | | | |
| ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | 1,412,762 | 1,926,694 |
| ເງິນແຮສຳລັບຂາດທຶນສິນເຊື່ອ | 13.2 | 1,290,949 | 759,544 |
| ລາຍຮັບດອກເບ້ຍ | | (71,960,698) | (12,807,766) |
| ລາຍຈ່າຍດອກເບ້ຍ | | 1,318,774 | 1,874,716 |
| **ກະແສເງິນສົດຈາກ/(ນຳໃຊ້)ໃນກິດຈະກຳການດຳເນີນງານກ່ອນການປ່ຽນແປງຂອງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **26,956,240** | **(9,432,313)** |
| (ເພີ່ມຂຶ້ນ)/ຫຼຸດລົງຂອງຊັບສິນໃນການດຳເນີນງານ | | | |
| ໜີ້ຕ້ອງຮັບຈາກທະນາຄານອື່ນ | | (15,650,939) | (15,008,862) |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ | | 56,214,204 | 1,753,732 |
| ຊັບສິນອື່ນໆ | | (297,575) | (148,318) |
| ເພີ່ມຂຶ້ນ/(ຫຼຸດລົງ)ຂອງໜີ້ສິນໃນການດຳເນີນງານ | | | |
| ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ | | 2,423,201 | (5,896,752) |
| ເງິນຝາກ ແລະ ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | (55,341,050) | 24,351,219 |
| ໜີ້ສິນອື່ນໆ | | 1,240,042 | 3,188,307 |
| ດອກເບ້ຍໄດ້ຮັບ | | 72,072,721 | 11,560,113 |
| ດອກເບ້ຍຈ່າຍ | | (1,269,644) | (2,363,569) |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **86,347,200** | **8,003,557** |
| **ກິດຈະກຳການລົງທຶນ** | | | |
| ຈ່າຍໃນການຊື້ຊັບສົມບັດ ແລະ ອຸປະກອນ | 14.1 | (230,586) | (215,195) |
| ການລົງທຶນໃນຫຼັກຊັບ | | (25,000,000) | (11,400,000) |
| **ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳການລົງທຶນ** | | **(25,230,586)** | **(11,615,195)** |

ທະນາຄານ ເມແບັງ ສາຂາລາວ

ໃບລາຍງານກະແສເງິນສົດ (ຕໍ່)
ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

| *ລາຍການ* | *ບົດອະທິບາຍ ເລກທີ* | *2023 ພັນກີບ* | *2022 ພັນກີບ* |
|---|---|---|---|
| **ກິດຈະກຳການເງິນ** | | | |
| **ກະແສເງິນສົດສຸດທິຈາກກິດຈະກຳການເງິນ** | | **-** | **-** |
| **ປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ** | | **61,116,614** | **(3,611,638)** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນປີ** | | **116,411,437** | **120,293,539** |
| ຜົນກະທົບຂອງສ່ວນຕ່າງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | | 82,018 | (270,464) |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **21** | **177,610,069** | **116,411,437** |

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ກວດຄືນໂດຍ:

ທ່ານ Tan Tee Huat
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

11 ເມສາ 2024

## 1. ຂໍ້ມູນສາຂາ

ທະນາຄານ ເມແບັງ ສາຂາລາວ ("ສາຂາ") ແມ່ນທະນາຄານສາຂາຕ່າງປະເທດ ເຊິ່ງລົງທຶນ ແລະ ຈົດທະບຽນໃນ ສປປ ລາວ.

*ການສ້າງຕັ້ງ ແລະ ການດຳເນີນງານ*

ສາຂາໄດ້ສ້າງຕັ້ງຂຶ້ນເປັນສາຂອງ ທະນາຄານ ມາເລຍັນ ເບີຫັດ, ທະນາຄານທີ່ຈົດທະບຽນໃນປະເທດມະເລເຊຍ. ສາຂາໄດ້ດຳເນີນງານພາຍໃຕ້ໃບອະນຸຍາດດຳເນີນທຸລະກິດເລກທີ 35/ທຫລ ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ໃນວັນທີ 26 ຕຸລາ 2012 ແລະ ໃບອະນຸຍາດດຳເນີນທຸລະກິດສະບັບປັບປຸງຄັ້ງທີສອງ ເລກທີ 18/ທຫລ ລົງວັນທີ 19 ພະຈິກ 2018.

ທຶນຈົດທະບຽນໃນເບື້ອງຕົ້ນຂອງສາຂາແມ່ນ 100,661,400,000 ກີບ. ເງິນທຶນຈົດທະບຽນທີ່ຖອກແລ້ວຕົວຈິງ ນະວັນທີ 31 ທັນວາ 2023 ແມ່ນ 200,783,129,000 ກີບ (31 ທັນວາ 2022: 200,783,129,000 ກີບ).

ກິດຈະກຳຫຼັກຂອງສາຂາແມ່ນໃຫ້ການບໍລິການທີ່ອຳນວຍຄວາມສະດວກດ້ານທຸລະກຳທະນາຄານ ແລະ ການບໍລິການດ້ານການເງິນທີ່ກ່ຽວຂ້ອງໃນ ສປປ ລາວ.

*ສະຖານທີ່*

ສາຂາຕັ້ງຢູ່ບ້ານເລກທີ 43, 45, 47 ຖະໜົນ ລ້ານຊ້າງ, ບ້ານ ຫັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ.

*ພະນັກງານ*

ຈຳນວນພະນັກງານທັງໝົດຂອງສາຂາ ນະວັນທີ 31 ທັນວາ 2023 ມີ 26 ຄົນ (2022: 27 ຄົນ).

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### 2.1 *ຖະແຫຼງການປະຕິບັດຕາມ*

ຄະນະບໍລິຫານຂອງສາຂາຖະແຫຼງວ່າເອກະສານລາຍງານການເງິນໄດ້ຖືກກະກຽມຢ່າງຖືກຕ້ອງຕາມກົດໝາຍການບັນຊີຂອງ ສປປ ລາວ ແລະ ບັນດາກົດລະບຽບທີ່ໄດ້ວາງອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

### 2.2 *ພື້ນຖານການກະກຽມ*

ສາຂາບັນທຶກບັນຊີເປັນເງິນລາວກີບ ("ກີບ") ແລະ ໄດ້ກະກຽມເອກະສານລາຍງານການເງິນເປັນຫົວໜ່ວຍ ("ພັນກີບ") ໂດຍອີງຕາມດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ກຳນົດໃຊ້ໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ ("LAS").

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.2 *ພື້ນຖານການກະກຽມ* (ຕໍ່)

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກກະກຽມໂດຍນຳໃຊ້ຫຼັກການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ, ໃບລາຍງານສ່ວນປ່ຽນແປງຂອງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍໃນເອກະສານລາຍງານແມ່ນບໍ່ໄດ້ອອກແບບມາໃຫ້ບັນດາຜູ້ທີ່ບໍ່ຮັບຮູ້ກ່ຽວກັບຫຼັກການບັນຊີຂອງ ສປປລາວ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງ ສປປ ລາວ, ແລະ ນອກຈາກນັ້ນ, ເອກະສານລາຍງານການເງິນສະບັບນີ້ບໍ່ໄດ້ມີຈຸດປະສົງເພື່ອນຳສະເໜີຖານະການເງິນຂອງສາຂາ, ຜົນການດຳເນີນງານ ແລະ ກະແສເງິນສົດ ອີງຕາມຫຼັກການບັນຊີທີ່ຍອມຮັບໂດຍທົ່ວໄປຂອງປະເທດອື່ນນອກຈາກ ສປປ ລາວ.

*ປີການບັນຊີ*

ປີການບັນຊີຂອງສາຂາແມ່ນເລີ່ມຕົ້ນແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ.

### 2.3 *ການປ່ຽນແປງນະໂຍບາຍການບັນຊີ*

ນະໂຍບາຍການບັນຊີທີ່ສາຂານຳມາໃຊ້ໃນການກະກຽມຂອງເອກະສານລາຍງານການເງິນເຫຼົ່ານີ້ແມ່ນສອດຄ່ອງກັບນະໂຍບາຍການບັນຊີທີ່ໃຊ້ໃນການກະກຽມເອກະສານລາຍງານການເງິນຂອງສາຂາສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022.

### 2.4 *ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ*

ລາຍຮັບ ແລະ ລາຍຈ່າຍດອກເບ້ຍໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໂດຍອີງຕາມຫຼັກການແບບຄ້າງຮັບຄ້າງຈ່າຍທີ່ນຳໃຊ້ວິທີການຄິດໄລ່ແບບເສັ້ນຊື່ ແລະ ອັດຕາດອກເບ້ຍທີ່ຖືກກຳນົດໄວ້ໃນສັນຍາເງິນກູ້/ເງິນຝາກຂອງລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ກາຍເປັນໜີ້ທີ່ບໍ່ເກີດດອກອອກຜົນ (ອີງຕາມບົດອະທິບາຍເລກທີ 2.8 ສຳລັບນິຍາມຂອງເງິນກູ້ທີ່ບໍ່ເກີດດອກອອກຜົນ) ຫຼື ເມື່ອຄະນະບໍລິຫານເຫັນວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະຄືນໄດ້ທັງດອກເບ້ຍ ແລະ ຕົ້ນທຶນ. ລາຍຮັບດອກເບ້ຍເງິນກູ້ດັ່ງກ່າວແມ່ນໄດ້ຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອໄດ້ຮັບເງິນຕົວຈິງ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.5 *ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ*

ຄ່າທຳນຽມ ແລະ ຄ່ານາຍໜ້າປະກອບດ້ວຍຄ່າທຳນຽມທີ່ໄດ້ຮັບຈາກການໂອນເງິນ (ລວມທັງການຊຳລະທາງການຄ້າ), ຄ່າທຳນຽມຈາກການແລກປ່ຽນເງິນຕາຕ່າງປະເທດ ແລະ ຄ່າທຳນຽມທີ່ເກີດຂຶ້ນຈາກການອອກໜັງສືຄໍ້າປະກັນທາງການເງິນ.

ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານບົນພື້ນຖານຖືຫຼັກການບັນຊີເງິນສົດ.

### 2.6 *ເງິນສົດ ແລະ ທຽບເທົ່າເງິນສົດ*

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ, ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງເຊິ່ງມີກຳນົດບໍ່ເກີນ 30 ວັນທີ່ສາມາດປ່ຽນເປັນເງິນສົດໄດ້ໃນທັນທີ; ແລະ ບັນຊີເງິນຝາກຢູ່ກັບທະນາຄານອື່ນທີ່ມີກຳນົດບໍ່ເກີນ 30 ວັນ.

### 2.7 *ເງິນກູ້ຢືມແກ່ລູກຄ້າ*

ເງິນກູ້ຢືມແກ່ລູກຄ້າແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດເຫຼືອທ້າຍລົບໃຫ້ເງິນແຮສະເພາະສຳລັບກິດຈະກຳສິນເຊື່ອນະທ້າຍປີ.

### 2.8 *ການຈັດປະເພດ ແລະ ຫັກເງິນແຮສຳລັບກິດຈະກຳສິນເຊື່ອ*

*ການຈັດປະເພດເງິນກູ້*

ອີງຕາມຂໍ້ຕົກລົງເລກທີ 512/ທຫລ ("ທຫລ 512") ລົງວັນທີ 29 ມິຖຸນາ 2018 ແລະ ຈົດໝາຍທາງການ ເລກທີ 898/ກຄທ ("OL898") ລົງວັນທີ 14 ພະຈິກ 2018, ສາຂາໄດ້ຈັດຊັ້ນເງິນກູ້ອອກເປັນ 5 ກຸ່ມ ໂດຍອີງຕາມປະຫວັດການຄ້າງຈ່າຍ ແລະ ປັດໄຈເຊີງຄຸນະພາບອື່ນໆ. ເງິນກູ້ຖືກຈັດຊັ້ນເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່(ກຸ່ມ B) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ, ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ໜີ້ສົງໄສ (ກຸ່ມ D) ຫຼື ໜີ້ສູນ (ກຸ່ມ E) ແມ່ນຈະຖືກພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ໜີ້ຕ້ອງຮັບທວງຍາກ ("NPL").

ສາຂາຍັງນຳໃຊ້ກົດລະບຽບເລກທີ 238/ທຫລ ລົງວັນທີ 26 ມີນາ 2020 ແລະ ຄຳແນະນຳເລກທີ 249/ທຫລ ລົງວັນທີ 11 ພຶດສະພາ 2020 ໂດຍ ທຫລ ກ່ຽວກັບການປັບໂຄງສ້າງເງິນກູ້ຢືມ, ການຂະຫຍາຍເວລາ ແລະ ການຮັກສາການຈັດຊັ້ນຂອງເງິນກູ້ເພື່ອຊ່ວຍຜູ້ກູ້ຢືມທີ່ໄດ້ຮັບຜົນກະທົບຈາກການລະບາດຂອງໂລກລະບາດໂຄວິດ-19. ດັ່ງນັ້ນ, ສາຂາໄດ້ປັບໂຄງສ້າງເງິນກູ້ທີ່ມີຄຸນນະພາບ ແລະ ຮັກສາການຈັດຊັ້ນໜີ້ຂອງເຂົາເຈົ້າຄືເກົ່າກ່ອນວັນທີ 01 ມັງກອນ 2020.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.8 *ການຈັດປະເພດ ແລະ ຫັກເງິນແຮສຳລັບກິດຈະກຳສິນເຊື່ອ* (ຕໍ່)

*ການຫັກເງິນແຮ*

ອີງຕາມ ທຫລ 512 ແລະ OL898, ສາຂາສ້າງຄັງແຮສຳລັບເງິນກູ້ຕາມການຈັດຊັ້ນໜີ້ ດັ່ງລຸ່ມນີ້:

| *ກຸ່ມ* | *ອັດຕາການຫັກເງິນແຮ* | *ປະເພດຄັງເງິນແຮ (i)* | *ບັນຊີສຳລັບຍອດເຫຼືອເງິນແຮ (ii)* | *ບັນຊີສຳລັບການປ່ຽນແປງຍອດເຫຼືອເງິນແຮ (iii)* |
|---|---|---|---|---|
| *ເງິນກູ້ທົ່ວໄປ* | | | | |
| A | 0.5% | ທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍອື່ນໆໃນການດຳເນີນງານ |
| B | 3.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ລາຍຈ່າຍອື່ນໆໃນການດຳເນີນງານ |
| *ເງິນກູ້ທີ່ບໍ່ເກີດດອກອອກຜົນ* | | | | |
| C | 20.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ |
| D | 50.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ |
| E | 100.0% | ສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ |

(i) ຈຳນວນເງິນແຮແມ່ນຄິດໄລ່ຈາກສູດລຸ່ມນີ້:

ກ. ເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ = ອັດຕາເງິນແຮ x ຍອດເຫຼືອເງິນກູ້

ຂ. ເງິນແຮສຳລັບເງິນກູ້ບໍ່ເກີດດອກອອກຜົນ = ອັດຕາເງິນແຮ x (ຍອດເຫຼືອເງິນກູ້ – ມູນຄ່າຫຼຸດຫຼັກຊັບຄ້ຳປະກັນ)

*ສາຂາໄດ້ເລືອກທີ່ຈະບໍ່ລວມເອົາມູນຄ່າຫຼຸດຫຼັກຊັບຄ້ຳປະກັນໃນການຄິດໄລ່ການເງິນແຮຕາມທີ່ໄດ້ອະນຸຍາດຕາມຂໍ້ກຳນົດ ທຫລ 512 ແລະ OL 898*

(ii) ຍອດເຫຼືອເງິນແຮສຳລັບ *ເງິນກູ້ທີ່ຖືກຈັດຊັ້ນເປັນກຸ່ມ A* ແມ່ນບັນທຶກໃນໃບລາຍງານຖານະການເງິນໃນ "ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ" ພາຍໃຕ້ທຶນ ແລະ ຄັງສຳຮອງຂອງສາຂາ.

ຍອດເຫຼືອສະສົມຂອງເງິນແຮສຳລັບ *ເງິນກູ້ທີ່ບໍ່ເກີດອອກດອກອອກຜົນ ແລະ ເງິນກູ້ທີ່ຈັດຊັ້ນຢູ່ຊັ້ນ B* ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ *"ເງິນກູ້ຢືມແກ່ລູກຄ້າ, ຫັກເງິນແຮສະເພາະກິດຈະກຳສິນເຊື່ອ"*.

(iii) ສ່ວນປ່ຽນແປງຂອງເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານຢູ່ *"ລາຍຈ່າຍຈາກການດຳເນີນງານອື່ນໆ"* ສຳລັບລາຍຈ່າຍເງິນແຮ ແລະ *"ລາຍຮັບອື່ນໃນການເນີນງານ"* ສຳລັບການເກັບຄືນລາຍເງິນແຮ

ການປ່ຽນແປງໃນເງິນແຮສຳລັບ*ເງິນແຮບໍ່ເກີດດອກອອກຜົນ* ແມ່ນໄດ້ຖືກບັນທຶກໃນໃບລາຍງານຜົນການດຳເນີນງານເປັນ *"ເງິນແຮສຸດທິສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນທີ່ໄດ້ຫັກໄວ້/(ຈົດລ້າງອອກ) ເປັນລາຍຈ່າຍ"*.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.9 *ຊັບສິນບັດຄົງທີ່*

ຊັບສິນບັດຄົງທີ່ລວມມີຊັບສິນບັດຄົງທີ່ມີຕົວຕົນ, ບໍ່ມີຕົວຕົນ ແລະ ຊັບສິນບັດຄົງທີ່ພວມດຳເນີນງານ. ຊັບສິນບັດຄົງທີ່ມີຕົວຕົນປະກອບມີ: ອາຄານ ແລະ ການປັ່ງປຸງ, ອຸປະກອນຫ້ອງການ, ເຟີນີເຈີ ແລະ ສິ່ງຕິດຕັ້ງ, ອຸປະກອນຄອມພິວເຕີ ແລະ ພາຫານະ. ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບມີຊ້ອບແວຄອມພິວເຕີ.

ຊັບສິນບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນລົບໃຫ້ຄ່າຫຼຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມ, ຖ້າມີ.

ຕົ້ນທຶນຂອງຊັບສິນບັດປະກອບດ້ວຍມູນຄ່າຊື້ບວກກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງອື່ນໆໃນການເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ.

ບັນດາລາຍຈ່າຍສຳລັບການຊື້ເພີ່ມ, ການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືກຕີເປັນຕົ້ນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສິນບັດຖືກຂາຍ ຫຼື ໝົດອາຍຸ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນ/ຄ່າເສື່ອມສະສົມຈະຖືກສະສາງຈາກໃບລາຍງານຖານະການເງິນ ແລະ ກຳໄລ ຫຼື ຂາດທຶນທີ່ມາຈາກການຂາຍອອກທີ່ຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

### 2.10 *ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສິນບັດຄົງທີ່*

ຄ່າຫຼຸ້ຍຫ້ຽນຂອງຊັບສິນບັດຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບເສັ້ນຊື່ໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ທີ່ຄາດຄະເນຂອງຊັບສິນບັດເຫຼົ່ານັ້ນ ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ອອກໂດຍປະທານສະພາແຫ່ງຊາດ ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2020 ກຳນົດໂດຍສະພາແຫ່ງຊາດ, ອັດຕາໃຊ້ປະຈຳປີມີດັ່ງຕໍ່ໄປນີ້:

| | |
|---|---|
| *ຊັບສິນບັດຄົງທີ່ມີຕົວຕົນ:* | |
| ອາຄານ ແລະ ການປັ່ງປຸງ | 10% |
| ອຸປະກອນຫ້ອງການ | 20% |
| ເຄື່ອງເຟີນີເຈີ ແລະ ສິ່ງຕິດຕັ້ງ | 20% |
| ອຸປະກອນຄອມພິວເຕີ | 20% |
| ພາຫະນະ | 20% |
| *ຊັບສິນບັດຄົງທີ່ບໍ່ມີຕົວຕົນ:* | |
| ຊ້ອບແວຄອມພິວເຕີ | 20% |

**2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)**

***2.11 ຄັງສໍາຮອງຕາມລະບຽບການ***

ພາຍໃຕ້ຂໍ້ກໍານົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ລົງວັນທີ 7 ທັນວາ 2018, ທະນາຄານທຸລະກິດຕ້ອງຮັກສາກໍາໄລສຸດທິຕາມຄັງສໍາຮອງດັ່ງຕໍ່ໄປນີ້:

- ຄັງສໍາຮອງຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມມາດຕາ 154 (ສະບັບປັບປຸງ), ກົດໝາຍວ່າດ້ວຍວິສາຫະກິດ ວັນທີ 29 ທັນວາ 2022, ສາຂາຕ້ອງໄດ້ສໍາຮອງ 10% ຂອງກໍາໄລຫຼັງຫັກອາກອນເພື່ອສ້າງຄັງສໍາຮອງໄວ້ໃນແຕ່ລະປີ. ເມື່ອຄັງສໍາຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ, ສາຂາສາມາດໂຈະການຫັກເງິນແຮ, ນອກຈາກວ່າ ກົດຫມາຍຈະລະບຸໄວ້ຢ່າງອື່ນ. ຄັງສະສົມ ແລະ ຄັງອື່ນໆຂອງສາຂາ ແມ່ນຂຶ້ນກັບການຕັດສິນໃຈຂອງຄະນະບໍລິຫານ. ດັ່ງນັ້ນ, ສາຂາຈຶ່ງໄດ້ມີການຈັດສັນຄັງສໍາຮອງສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023 ດັ່ງຕໍ່ໄປນີ້:

| *ຄັງສະສົມ* | *% ຂອງກໍາໄລຫຼັງອາກອນ (ຫັກລົບຍອດຂາດທຶນສະສົມ, ຖ້າຫາກມີ)* |
|---|---:|
| ຄັງສໍາຮອງຕາມລະບຽບການ | 10 |
| ຄັງແຮເພື່ອຂະຫຍາຍທຸລະກິດ | - |

***2.12 ການເຊົ່າ***

*2.12.1. ສິດໃນການນໍາໃຊ້ຊັບສິນ*

ໃນມື້ເລີ່ມຕົ້ນຂອງສັນຍາ, ສາຂາຈະປະເມີນວ່າສັນຍາເປັນ, ຫຼື ປະກອບດ້ວຍອົງປະກອບຂອງການເຊົ່າບໍ່ນັ້ນ ແມ່ນອີງຕາມການພິຈາລະນາສັນຍາທີ່ບົ່ງບອກເຖິງການເປັນຜູ້ນໍາໃຊ້ (ຜູ້ເຊົ່າ) ສິດໃນການຄວບຄຸມການນໍາໃຊ້ຊັບສິນ ທີ່ລະບຸໃນຊ່ວງໄລຍະເວລາໃດໜຶ່ງໃນການແລກປ່ຽນ. ຫາກສັນຍາມີອົງປະກອບການເຊົ່າຫຼາຍກວ່າໜຶ່ງອົງປະກອບ ຫຼື ປະສົມປະສານທຸລະກໍາການເຊົ່າ ແລະ ການບໍລິການ ຈະຖືກພິຈາລະນາໃຫ້ແບ່ງອອກເປັນສ່ວນຕາມແຕ່ລະອົງປະກອບຂອງສັນຍາເຊົ່າ ແລະ ທີ່ບໍ່ແມ່ນອົງປະກອບຂອງສັນຍາເຊົ່າໂດຍສະຫຼຸບ ແລະ ຕີລາຄາຂອງສັນຍາຄືນໃໝ່ທຸກຄັ້ງຕາມພື້ນຖານລາຄາຊື້ຂາຍສິນຄ້າລາຍການດຽວ. ສາຂາປະສົມປະສານສ່ວນປະກອບຂອງສັນຍາເຊົ່າ ແລະ ອົງປະກອບທີ່ບໍ່ແມ່ນສັນຍາເຊົ່າໃນກໍລະນີທີ່ບໍ່ສາມາດແຍກສ່ວນປະກອບທີ່ບໍ່ແມ່ນສັນຍາຄ່າເຊົ່າໄດ້.

ສາຂາຮັບຮູ້ສິດນໍາໃຊ້ຊັບສິນໃນວັນທີເລີ່ມຕົ້ນຂອງການເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນທີ່ຕິດພັນສາມາດນໍາໃຊ້ໄດ້). ສິດນໍາໃຊ້ຊັບສິນແມ່ນຖືກວັດແທກຕາມຕົ້ນທຶນ, ລົບໃຫ້ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມສະສົມ, ແລະ ດັດປັບການວັດແທກຄືນໜີ້ສິນຕາມສັນຍາເຊົ່າ. ຕົ້ນທຶນຂອງສິດນໍາໃຊ້ຊັບສິນລວມມີ ມູນຄ່າໜີ້ຕ້ອງສົ່ງສັນຍາເຊົ່າດັດແກ້ສໍາລັບ ການຊໍາລະສະສາງທີ່ເກີດຂຶ້ນນະມື້ ຫຼື ກ່ອນວັນທີເລີ່ມຕົ້ນຂອງການເຊົ່າ, ບວກກັບບັນດາລາຍຈ່າຍຕົ້ນທຶນທາງກົງທີ່ເກີດຂຶ້ນ ແລະ ລາຍຈ່າຍຄາດຄະເນທີ່ຈະຮື້ຖອນ ແລະ ເຄື່ອນຍ້າຍຊັບສິນອື່ນໆພາຍໃຕ້ສັນຍາເຊົ່າ ຫຼື ການຕິດຕັ້ງຄືນບັນດາຊັບສິນ ຫຼື ສະຖານທີ່ທີ່ຕັ້ງຢູ່ນັ້ນ, ລົບສິ່ງຈູງໃຈການເຊົ່າທີ່ໄດ້ຮັບ. ໄລຍະເວລາການເຊົ່າ ລວມເຖິງທາງເລືອກຂອງໄລຍະການຕໍ່ສັນຍາຖ້າມີຄວາມແນ່ນອນທີ່ສົມເຫດສົມຜົນໃນການທີ່ຈະປະຕິບັດທາງເລືອກນັ້ນ. ນອກຈາກວ່າ ສາຂາລວບລວມສິດຄວາມເປັນເຈົ້າຂອງທີ່ແນ່ນອນຂອງຊັບສິນຈາກສັນຍາເຊົ່າໄດ້ຢ່າງສົມເຫດສົມຜົນໃນມື້ສິ້ນສຸດໄລຍະເວລາເຊົ່າ, ການຮັບຮູ້ສິດໃນການນໍາໃຊ້ຊັບສິນ ແມ່ນຈະຫັກຄ່າຫຼຸ້ຍຫ້ຽນແບບເສັ້ນຊື່ຕາມອາຍຸການໃຊ້ງານ ແລະ ອາຍຸສັນຍາຄ່າເຊົ່າ. ສິດໃນການນໍາໃຊ້ຊັບສິນແມ່ນຈະຕ້ອງໄດ້ຮັບການປະເມີນຄ່າເສື່ອມມູນຄ່າ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.12 *ການເຊົ່າ* (ຕໍ່)

#### 2.12.2. *ໜີ້ສິນຕາມສັນຍາເຊົ່າ*

ໃນວັນທີເລີ່ມຕົ້ນຂອງການເຊົ່າ, ສາຂາໄດ້ຮັບຮູ້ໜີ້ສິນຕາມສັນຍາເຊົ່າທີ່ຖືກວັດແທກໃນມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າທີ່ຕ້ອງຈ່າຍຕະຫຼອດໄລຍະສັນຍາເຊົ່າ. ການຈ່າຍຄ່າເຊົ່າລວມມີການຈ່າຍແບບຄົງທີ່ (ລວມທັງການຈ່າຍເປັນກຳມະສິດ) ລົບແຮງຈູງໃຈຂອງການເຊົ່າທີ່ໄດ້ຮັບ, ການຈ່າຍຄ່າເຊົ່າຜັນແປ ເຊິ່ງຂຶ້ນກັບດັດສະນີ ຫຼື ອັດຕາ ແລະ ມູນຄ່າຄາດຄະເນວ່າຈະຈ່າຍພາຍໃຕ້ການຄໍ້າປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າລວມເຖິງລາຄາການໃຊ້ສິດຂອງທາງເລືອກໃນການຊື້ທີ່ສົມເຫດສົມຜົນທີ່ສາຂາຈະຕ້ອງໃຊ້ ແລະ ການຈ່າຍຄ່າປັບໄໝສຳລັບການຍົກເລີກສັນຍາຫາກໄລຍະເວລາການເຊົ່າສະທ້ອນໃຫ້ເຫັນເຖິງການໃຊ້ສິດຂອງສາຂາໃນການຍົກເລີກ. ຄ່າເຊົ່າຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນຊ່ວງເວລາທີ່ເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດມີການຊຳລະ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງການຊຳລະຄ່າເຊົ່າ, ສາຂານຳໃຊ້ອັດຕາສ່ວນເພີ່ມຂອງການກູ້ຢືມນະມື້ເລີ່ມຕົ້ນຂອງສັນຍາເຊົ່າ ຖ້າອັດຕາດອກເບ້ຍສ່ວນຫຼຸດສັນຍາເຊົ່າບໍ່ສາມາດກຳນົດໄດ້. ຫຼັງຈາກມື້ເລີ່ມຕົ້ນຂອງສັນຍາເຊົ່າ, ມູນຄ່າໜີ້ສິນຕາມສັນຍາເຊົ່າ ແມ່ນເພີ່ມຂຶ້ນເພື່ອສະທ້ອນເຖິງດອກເບ້ຍ ແລະ ສ່ວນລົດລົງຈາກໄດ້ຮັບການຊຳລະສັນຍາເຊົ່າ. ນອກຈາກນີ້, ມູນຄ່າຕາມບັນຊີ ຂອງໜີ້ສິນຕາມສັນຍາເຊົ່າ ແມ່ນໄດ້ຮັບການວັດແທກຄືນໃໝ່ຖ້າມີການປ່ຽນແປງໃດໜຶ່ງ ເຊັ່ນການປ່ຽນແປງຂອງໄລຍະເວລາການເຊົ່າ, ການປ່ຽນແປງໃນເນື້ອໃນເງື່ອນໄຂການຊຳລະ ຫຼື ປ່ຽນແປງໃນການປະເມີນເພື່ອຊື້ບັນດາຊັບສິນດັ່ງກ່າວ.

#### 2.12.3. *ການເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນມູນຄ່າຕໍ່າ*

ສາຂານຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າໄລຍະສັ້ນ ທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າຈາກວັນທີເລີ່ມຕົ້ນຂອງການເຊົ່າ ແລະ ບໍ່ລະບຸທາງເລືອກໃນການຊື້. ພ້ອມທັງນຳໃຊ້ການຍົກເວັ້ນການຮັບຮູ້ສັນຍາເຊົ່າຊັບສິນມູນຄ່າຕໍ່າຂອງຊັບສິນທີ່ພິຈາລະນາວ່າມີມູນຄ່າຕໍ່າ. ການຊຳລະຄ່າເຊົ່າຂອງສັນຍາເຊົ່າໄລຍະສັ້ນ ແລະ ຊັບສິນທີ່ມີມູນຄ່າຕໍ່າ ແມ່ນຮັບຮູ້ເປັນລາຍຈ່າຍແບບເສັ້ນຊື່ຕະຫຼອດໄລຍະສັນຍາເຊົ່າ.

#### 2.12.4. *ການຕັດສິນໃຈທີ່ສຳຄັນໃນການກຳນົດໄລຍະເວລາຂອງສັນຍາ*

ສາຂາກຳນົດໄລຍະເວລາການເຊົ່າລະບຸໄລຍະເວລາທີ່ບໍ່ສາມາດຍົກເລີກຂອງການເຊົ່າ, ລວມທັງໄລຍະເວລາຂອງທາງເລືອກໃນການຕໍ່ສັນຍາເຊົ່າ ຖ້າມີຄວາມໝັ້ນໃຈວ່າຈະເລືອກທາງນີ້ ຫຼື ໄລຍະເວລາຂອງທາງເລືອກໃນການຍຸດຕິສັນຍາເຊົ່າ ຖ້າມີຄວາມໝັ້ນໃຈວ່າຈະບໍ່ເລືອກທາງດັ່ງກ່າວ.

ສາຂານຳໃຊ້ການຕັດສິນໃຈໃນການປະເມີນວ່າຈະດຳເນີນການຕໍ່ສັນຍາຄືນໃໝ່ທີ່ແນ່ນອນ. ການຕັດສິນໃຈແມ່ນພິຈາລະນາປັດໄຈທີ່ກ່ຽວຂ້ອງທັງໝົດທີ່ກໍ່ໃຫ້ເກີດການຈູງໃຈທາງເສດຖະກິດສຳລັບການດຳເນີນການຕໍ່ສັນຍາຄືນໃໝ່. ຫຼັງຈາກວັນທີເລີ່ມຕົ້ນສາຂາປະເມີນຄືນໃໝ່ໜີ້ສິນຕາມສັນຍາເຊົ່າ ຖ້າມີເຫດການທີ່ສຳຄັນພາຍໃນການຄວບຄຸມ ແລະ ກະທົບຕໍ່ຄວາມສາມາດທີ່ຈະດຳເນີນ (ຫຼື ບໍ່ດຳເນີນ) ການຕໍ່ສັນຍາຄືນໃໝ່ (ຕົວຢ່າງ ການປ່ຽນແປງທາງຍຸດທະສາດຂອງທຸລະກິດ). ສາຂາລວມມີໄລຍະເວລາການຕໍ່ສັນຍາຄືນໃໝ່ ເປັນສ່ວນໜຶ່ງຂອງໄລຍະເວລາການເຊົ່າທີ່ສຳຄັນຂອງຊັບສິນເຫຼົ່ານີ້ໃນການດຳເນີນງານ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.13 *ການເຄື່ອນໄຫວເປັນສະກຸນເງິນຕາຕ່າງປະເທດ*

ສາຂາໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກການເຄື່ອນໄຫວຕາມສະກຸນເງິນເດີມ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດປີທີ່ສິ້ນສຸດແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນໃນມື້ສ້າງໃບລາຍງານຖານະການເງິນ (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນ ວັນທີ 31 ທັນວາ 2023 ໄດ້ສະແດງຢູ່ຂ້າງລຸ່ມນີ້). ສ່ວນຜິດດ່ຽງທີ່ເກີດຂຶ້ນຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນ ນະມື້ໃບລາຍງານຖານະການເງິນແມ່ນຖືກບັນທຶກເຂົ້າໃນ *"ກຳໄລ/(ຂາດທຶນ) ຈາກການຊື້ຂາຍເງິນຕາຕ່າງປະເທດສຸດທິ"* ໃນໃບລາຍງານຜົນການດຳເນີນງານ.

| | *31 ທັນວາ 2023* | *31 ທັນວາ 2022* |
|---|---|---|
| | *ກີບ* | *ກີບ* |
| ໂດລາສະຫະລັດ ("ໂດລາ") | 20,465 | 17,219 |
| ບາດໄທ ("ບາດ") | 653.00 | 497.00 |

### 2.14 *ອາກອນ*

*ອາກອນໃນປີ*

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລແມ່ນອີງຕາມກຳໄລພາຍໃນໄລຍະປັດຈຸບັນ ເຊິ່ງອີງຕາມກົດໝາຍສ່ວຍສາອາກອນ ຂອງ ສປປ ລາວ. ສາຂາມີພັນທະຈ່າຍອາກອນໃນອັດຕາ 20% ຂອງກາໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນໃໝ່ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2020. ຕາມຄວາມເໝາະສົມ, ສາຂານອນໃນອັດຕາອາກອນຂອງ 20%. ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງກົມສ່ວຍສາອາກອນ.

*ອາກອນລໍຖ້າສະສາງ*

ອາກອນລໍຖ້າສະສາງແມ່ນຖືກຄິດໄລ່ຈາກສ່ວນຕ່າງຊົ່ວຄາວ ຕາມມື້ທີ່ອອກໃບລາຍງານຖານະການເງິນ ລະຫວ່າງຊັບສິນ ແລະ ໜີ້ສິນທາງອາກອນ ແລະ ມູນຄ່າຕາມບັນຊີເພື່ອຈຸດປະສົງໃນການລາຍງານທາງການເງິນ. ໜີ້ສິນອາກອນລໍຖ້າສະສາງແມ່ນຖືກຮັບຮູ້ເປັນສ່ວນຜິດດ່ຽງຊົ່ວຄາວດ້ານອາກອນ, ຍົກເວັ້ນເມື່ອໜີ້ສິນອາກອນລໍຖ້າສະສາງລະເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລຖືກເສຍອາກອນ ແລະ ຂາດທຶນທາງອາກອນ.

ມູນຄ່າຕາມບັນຊີຂອງຊັບສິນອາກອນລໍຖ້າສະສາງ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ທັງໝົດ ຫຼື ພາກສ່ວນໜຶ່ງຂອງຊັບສິນອາກອນລໍຖ້າສະສາງຈະຖືກອະນຸຍາດໃຫ້ຫັກ. ຊັບສິນອາກອນລໍຖ້າສະສາງທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ສ້າງບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ຊັບສິນອາກອນລໍຖ້າສະສາງ ສາມາດຫັກອອກໄດ້.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.14 *ອາກອນ* (ຕໍ່)

*ອາກອນລໍຖ້າສະສາງ* (ຕໍ່)

ຊັບສິນອາກອນລໍຖ້າສະສາງ ແລະ ໜີ້ສິນອາກອນລໍຖ້າສະສາງແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ພາຍໃນປີ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ກະກຽມໃບລາຍງານຖານະການເງິນ.

ອາກອນໃນປີ ແລະ ອາກອນລໍຖ້າສະສາງຈະຖືກຮັບຮູ້ເປັນລາຍຮັບຜົນປະໂຫຍດທາງອາກອນ ຫຼື ລາຍຈ່າຍໃນໃບລາຍງານຜົນການດຳເນີນງານ.

ສາຂາໄດ້ຫັກລ້າງຊັບສິນອາກອນລໍຖ້າສະສາງ ແລະ ໜີ້ສິນອາກອນລໍຖ້າສະສາງຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ແລະ ສາຂາມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

### 2.15 *ຜົນປະໂຫຍດຂອງພະນັກງານ*

*ຜົນປະໂຫຍດຫຼັງອອກການ*

ຜົນປະໂຫຍດຫຼັງອອກການຈະຖືກຈ່າຍໃຫ້ພະນັກງານສາຂາຜູ້ທີ່ບຳນານ ໂດຍພະແນກກອງທຶນສະຫວັດດີການສັງຄົມເຊິ່ງຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສາຂາໄດ້ຖືກກຳນົດໃຫ້ປະກອບສ່ວນເຂົ້າໃນຜົນປະໂຫຍດຫຼັງອອກການຂອງພະນັກງານ ໂດຍການຈ່າຍເງິນເຂົ້າປະກັນສັງຄົມໃນອັດຕາ 6.00% ຂອງເງິນເດືອນພື້ນຖານຂອງພະນັກງານ ທຸກໆເດືອນ. ສາຂາບໍ່ມີພັນທະອື່ນອີກນອກຈາກຜົນປະໂຫຍດນີ້ໃຫ້ກັບພະນັກງານຫຼັງອອກການ.

*ຜົນປະໂຫຍດຈາກການຍົກເລີກສັນຍາ*

ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍແຮງງານ ສະບັບປັບປຸງເລກທີ 43/ສພຊ ທີ່ອະນຸມັດໂດຍປະທານປະເທດຂອງ ສປປ ລາວ ໃນວັນທີ 28 ມັງກອນປີ 2014, ສາຂາມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງຍ້ອນກໍລະນີດັ່ງລຸ່ມນີ້:

- ເມື່ອພະນັກງານຂາດທັກສະຄວາມຊ່ຽວຊານ ຫຼື ບໍ່ມີສຸຂະພາບແຂງແຮງດັ່ງນັ້ນຈຶ່ງບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ເມື່ອນາຍຈ້າງຫາກໄດ້ພິຈາລະນາວ່າມີຄວາມຈຳເປັນຈະຕ້ອງໄດ້ຫຼຸດຈຳນວນພະນັກງານລົງເພື່ອປັບປຸງໂຄງສ້າງວຽກງານພາຍໃນໜ່ວຍງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ກ່າວມາຂ້າງເທິງ. ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານທີ່ໄດ້ຮັບກ່ອນການເລີກຈ້າງ ສຳລັບພະນັກງານທີ່ເຮັດວຽກຕ່ຳກວ່າ 3 ປີ. ນະວັນທີ 31 ທັນວາ 2023, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ສາຂາບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

## 3. ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

| | 2023<br>*ພັນກີບ* | 2022<br>*ພັນກີບ* |
|---|---|---|
| **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ:** | | |
| ທຸລະກຳລະຫວ່າງທະນາຄານ | 2,029,452 | 383,760 |
| ເງິນກູ້ຢືມແກ່ລູກຄ້າ (*) | 68,901,709 | 11,845,183 |
| ຫຼັກຊັບຖືໄວ້ຈົນຄົບກຳນົດ | 1,029,537 | 578,823 |
| | **71,960,698** | **12,807,766** |
| **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍສຳລັບ:** | | |
| ເງິນຝາກລູກຄ້າ | (1,318,774) | (1,874,716) |
| | **(1,318,774)** | **(1,874,716)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **70,641,924** | **10,933,050** |

(*) ໃນນັ້ນ, ລາຍຮັບດອກເບ້ຍຈາກການເກັບຄືນໜີ້ສູນແມ່ນ 58,516,467 ພັນກີບ (2022: 1,746,690 ພັນກີບ).

## 4. ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ

| | 2023<br>*ພັນກີບ* | 2022<br>*ພັນກີບ* |
|---|---|---|
| **ລາຍຮັບຈາກຄ່າທຳນຽມ ແລະ ຄ່ານາຍໜ້າຈາກ:** | | |
| ຄ່າທຳນຽມການອະນຸມັດເງິນກູ້ຢືມ | 56,300 | 752,151 |
| ກິດຈະກຳທາງດ້ານການເງິນ | - | 14,742 |
| ກິດຈະກຳການຊຳລະສະສາງ | 190,302 | 209,347 |
| | **246,602** | **976,240** |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າສຳລັບ:** | | |
| ທຸລະກຳກັບລູກຄ້າ | (258,720) | (331,867) |
| | **(258,720)** | **(331,867)** |
| **ຄ່າທຳນຽມ ແລະ ຄ່ານາຍໜ້າສຸດທິ** | **(12,118)** | **644,373** |

## 5. ລາຍຮັບອື່ນໆຈາກການດຳເນີນງານ

| | 2023<br>*ພັນກີບ* | 2022<br>*ພັນກີບ* |
|---|---|---|
| ລາຍຮັບຈາກທຸລະກຳລະຫວ່າງທະນາຄານອື່ນ | 200,102 | 371,766 |
| ເກັບຄືນເງິນແຮສຳລັບເງິນກູ້ໜີ້ຄວນເອົາໃຈໃສ່ *(ບົດອະທິບາຍເລກທີ 13.2)* | 1,245,427 | - |
| ເກັບຄືນເງິນແຮສຳລັບເງິນກູ້ໜີ້ປົກກະຕິ *(ບົດອະທິບາຍເລກທີ 13.2)* | 234,006 | - |
| ເກັບຄືນໜີ້ເສຍທີ່ຈັດລ້າງອອກໃນປີທີ່ຜ່ານມາ | 39,495,752 | 141,703 |
| ອື່ນໆ | 220 | 1,129 |
| | **41,175,507** | **514,598** |

ທະນາຄານ ເມແບັງ ສາຂາລາວ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
ນະວັນທີ ແລະ ສໍາລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023

## 6. ເງິນເດືອນ ແລະ ຄ່າໃຊ້ຈ່າຍອື່ນໆໃຫ້ແກ່ພະນັກງານ

| | 2023<br>*ພັນກີບ* | 2022<br>*ພັນກີບ* |
|---|---|---|
| ຄ່າແຮງງານ ແລະ ເງິນອຸດໜູນ | 13,094,916 | 10,288,862 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 304,717 | 278,619 |
| | **13,399,633** | **10,567,481** |

## 7. ລາຍຈ່າຍບໍລິຫານອື່ນໆ

| | 2023<br>*ພັນກີບ* | 2022<br>*ພັນກີບ* |
|---|---|---|
| ຄ່າເຊົ່າຫ້ອງການ | 164,443 | 190,469 |
| ຄ່ານ້ຳມັນ | 54,866 | 42,365 |
| ຄ່າເຄື່ອງໃຊ້ຫ້ອງການ | 115,857 | 112,813 |
| ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 6,958 | 3,532 |
| ຄ່າໂທລະຄົມມະນາຄົມ | 146,298 | 141,401 |
| ຄ່າສ້ອມແປງ ແລະ ບໍາລຸງຮັກສາ | 3,209,981 | 2,117,675 |
| ຄ່າໄຟຟ້າ ແລະ ນ້ຳປະປາ | 178,284 | 136,971 |
| ຄ່າບໍລິການການກວດສອບ | 529,032 | 409,699 |
| ຄ່າຕ້ອນຮັບ | 1,189 | - |
| ຄ່າປະກັນໄພ | 192,365 | 177,195 |
| ຄ່າໃຊ້ຈ່າຍພາຍໃນຫ້ອງການ | 138,820 | 133,200 |
| ຄ່າທີ່ປຶກສາ | 788,702 | 465,057 |
| ອື່ນໆ | 2,000 | 18,104 |
| | **5,528,795** | **3,948,481** |

## 8. ລາຍຈ່າຍອື່ນໆຈາກການດໍາເນີນງານ

| | 2023<br>*ພັນກີບ* | 2022<br>*ພັນກີບ* |
|---|---|---|
| ລາຍຈ່າຍເງິນແຮສຸດທິສໍາລັບເງິນກູ້ທີ່ເກີດດອກຜົນ | - | 784,223 |
| ຄ່າປະກັນເງິນຝາກໃຫ້ກັບກອງທຶນປົກປ້ອງຜູ້ຝາກເງິນ | 71,155 | 74,777 |
| | **71,155** | **859,000** |

**9.** ເງິນສົດໃນຄັງ

| | *31/12/2023* *ພັນກີບ* | *31/12/2022* *ພັນກີບ* |
|---|---|---|
| ເງິນສົດໃນຄັງທີ່ເປັນເງິນກີບ | 2,007,736 | 1,075,657 |
| ເງິນສົດໃນຄັງທີ່ເປັນເງິນຕາຕ່າງປະເທດ | 4,301,810 | 2,824,154 |
| | **6,309,546** | **3,899,811** |

**10.** ເງິນຝາກຢູ່ ທຫລ

| | *31/12/2023* *ພັນກີບ* | *31/12/2022* *ພັນກີບ* |
|---|---|---|
| ເງິນຝາກກະແສລາຍວັນ | 166,287,198 | 108,883,392 |
| ເງິນແຮຝາກບັງຄັບ (*) | 8,847,788 | 3,796,763 |
| ເງິນຝາກຄໍ້າປະກັນທຶນຈົດທະບຽນ (**) | 31,729 | 25,031,729 |
| | **175,166,715** | **137,711,884** |

ເງິນຝາກຢູ່ ທຫລ ລວມມີ ເງິນຝາກກະແສລາຍວັນ, ເງິນແຮຝາກບັງຄັບ ແລະ ເງິນຝາກຄໍ້າປະກັນທຶນຈົດທະບຽນ. ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

(*) ຕາມຂໍ້ກໍານົດຂອງ ທຫລ, ສາຂາໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງເງິນສົດໄວ້ກັບ ທຫລ ໃນຮູບແບບເງິນຝາກແຮບັງຄັບ, ເຊິ່ງຖືກຄິດໄລ່ໃນອັດຕາ 8.00% ສໍາລັບເງິນກີບ ແລະ ອັດຕາ 10.00% ສໍາລັບເງິນຕາຕ່າງປະເທດອື່ນໆ (2022: 5.00% ສໍາລັບເງິນກີບ ແລະ ສໍາລັບເງິນຕາຕ່າງປະເທດອື່ນໆ), ຄິດໄລ່ 2 ຄັ້ງຕໍ່ເດືອນ, ຂອງຍອດເງິນຝາກຂອງລູກຄ້າເຊິ່ງມີກໍານົດຕໍ່າກວ່າ 12 ເດືອນ. ພາຍໃນປີ, ສາຂາຮັກສາເງິນແຮຝາກບັງຄັບຕາມຂໍ້ຕົກລົງຂອງທຫລ.

(**) ອີງຕາມຂໍ້ຕົກລົງ ເລກທີ 721/ທຫລ ລົງວັນທີ 22 ກັນຍາ 2022 ແລະ ມີຜົນສັກສິດຕັ້ງແຕ່ວັນທີ 22 ກັນຍາ 2022, ທະນາຄານທຸລະກິດໄດ້ຖືກຮຽກຮ້ອງໃຫ້ຕ້ອງຮັກສາຍອດເຫຼືອເງິນຝາກຄໍ້າປະກັນທຶນຈົດທະບຽນຢູ່ ທຫລ ບໍ່ໃຫ້ບັນຊີດັ່ງກ່າວມີຍອດເຫຼືອເປັນສູນ.

## 11. ເງິນຝາກຢູ່ທະນາຄານອື່ນ

### *11.1 ເງິນຝາກກະແສລາຍວັນ*

| | *31/12/2023* *ພັນກີບ* | *31/12/2022* *ພັນກີບ* |
|---|---|---|
| **ເງິນຝາກກັບທະນາຄານຕ່າງປະເທດ** | **5,013,325** | **3,628,234** |
| ທະນາຄານ ກຸງເທບຈໍາກັດ ມະຫາຊົນ | 1,299,255 | 1,018,140 |
| ທະນາຄານ ເມແບັງ – ສາຂາ ນິວຢອກ | 3,714,070 | 2,610,094 |
| | **5,013,325** | **3,628,234** |

### *11.2 ເງິນຝາກມີກໍານົດ*

| | *31/12/2023* *ພັນກີບ* | *31/12/2022* *ພັນກີບ* |
|---|---|---|
| **ເງິນຝາກກັບທະນາຄານຕ່າງປະເທດ** | **67,110,684** | **31,510,770** |
| ທະນາຄານ ເມແບັງ – ສໍານັກງານໃຫຍ່ | 67,110,684 | 31,510,770 |
| | **67,110,684** | **31,510,770** |

ເງິນຝາກມີກໍານົດຢູ່ທະນາຄານ ເມແບັງ - ສໍານັກງານໃຫຍ່ ແມ່ນມີກໍານົດເວລາ 3 ເດືອນ ແລະ ໄດ້ຮັບດອກເບ້ຍໃນອັດຕາ 0.11% ຫາ 0.18% ຕໍ່ປີ.

## 12. ຫຼັກຊັບຖືໄວ້ຈົນຄົບກໍານົດ

| | 31/12/2023<br>*ພັນກີບ* | 31/12/2022<br>*ພັນກີບ* |
|---|---:|---:|
| ພັນທະບັດອອກໂດຍ ກະຊວງການເງິນ | 36,400,000 | 11,400,000 |
| | **36,400,000** | **11,400,000** |

ລາຍລະອຽດຂອງພັນທະບັດອອກໂດຍ ກະຊວງການເງິນ ໃນວັນທີ 31 ທັນວາ 2023 ລວມມີ:

| *ໄລຍະເວລາ* | *ວັນທີຊື້* | *ວັນທີຄົບກໍານົດ* | *ມູນຄ່າໜ້າບັດ*<br>*ພັນກີບ* | *ອັດຕາດອກເບ້ຍ*<br>*% ຕໍ່ປີ* |
|---|---:|---:|---:|---:|
| 12 ເດືອນ | 08 ພຶດສະພາ 2023 | 08 ພຶດສະພາ 2024 | 11,400,000 | 5.50% |
| 12 ເດືອນ | 24 ກໍລະກົດ 2023 | 24 ກໍລະກົດ 2024 | 25,000,000 | 5.50% |
| | | | **36,400,000** | |

## 13. ເງິນກູ້ຢືມ ແລະ ເງິນລ່ວງໜ້າແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະສໍາລັບກິດຈະກໍາສິນເຊື່ອສຸດທິ

| | 31/12/2023<br>*ພັນກີບ* | 31/12/2022<br>*ພັນກີບ* |
|---|---:|---:|
| ເງິນກູ້ຢືມ ແລະ ເງິນລ່ວງໜ້າແກ່ລູກຄ້າ | 81,605,812 | 140,152,163 |
| *ລວມມີ:* | | |
| *ເງິນກູ້ໃຫ້ສະຖາບັນການເງິນ* | 22,046,784 | *39,597,387* |
| *ອື່ນໆ* | 59,559,028 | *100,554,776* |
| ຫັກເງິນແຮສໍາລັບເງິນກູ້ສະເພາະ *(ບົດອະທິບາຍເລກທີ 13.2)* | (256,838) | (1,298,036) |
| *ລວມມີ:* | | |
| *ເງິນແຮສະເພາະສໍາລັບໜີ້ຄວນເອົາໃຈໃສ່* | *(71,864)* | *(1,298,036)* |
| *ເງິນແຮສະເພາະສໍາລັບເງິນກູ້ທີ່ບໍ່ເກີດດອກອອກຜົນ* | *(184,974)* | *-* |
| | **81,348,974** | **138,854,127** |

| | 2023<br>*ອັດຕາດອກເບ້ຍ*<br>*% ຕໍ່ປີ* | 2022<br>*ອັດຕາດອກເບ້ຍ*<br>*% ຕໍ່ປີ* |
|---|---:|---:|
| ເງິນກູ້ຢືມ ແລະ ເງິນລ່ວງໜ້າທີ່ເປັນເງິນກີບ | 3.50 - 12.00 | 3.50 - 12.00 |
| ເງິນກູ້ຢືມ ແລະ ເງິນລ່ວງໜ້າທີ່ເປັນເງິນໂດລາ | 4.65 - 11.00 | 4.65 - 10.00 |
| ເງິນກູ້ຢືມ ແລະ ເງິນລ່ວງໜ້າທີ່ເປັນເງິນບາດ | 6.25 - 9.25 | 7.75 - 9.25 |

## 13. ເງິນກູ້ຢືມ ແລະ ເງິນລ່ວງໜ້າແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະສໍາລັບກິດຈະກໍາສິນເຊື່ອສຸດທິ (ຕໍ່)

### 13.1 *ການວິເຄາະເງິນກູ້ຢືມແກ່ລູກຄ້າ*

*ວິເຄາະຕາມສະກຸນເງິນ*

| | *31/12/2023* *ພັນກີບ* | *31/12/2022* *ພັນກີບ* |
|---|---|---|
| ເງິນກູ້ຢືມ ແລະ ເງິນລ່ວງໜ້າທີ່ເປັນເງິນກີບ | 35,868,033 | 79,901,638 |
| ເງິນກູ້ຢືມ ແລະ ເງິນລ່ວງໜ້າທີ່ເປັນເງິນໂດລາ | 45,737,779 | 46,494,952 |
| ເງິນກູ້ຢືມ ແລະ ເງິນລ່ວງໜ້າທີ່ເປັນເງິນບາດ | - | 13,755,573 |
| | **81,605,812** | **140,152,163** |

*ວິເຄາະຕາມສະຖານະຂອງເງິນກູ້ຢືມ*

| | *31/12/2023* *ພັນກີບ* | *31/12/2022* *ພັນກີບ* |
|---|---|---|
| ເງິນກູ້ຢືມທີ່ເກີດດອກອອກຜົນ | 80,680,943 | 140,152,163 |
| ເງິນກູ້ຢືມທີ່ບໍ່ເກີດດອກອອກຜົນ | 924,869 | - |
| | **81,605,812** | **140,152,163** |

*ວິເຄາະຕາມໄລຍະເວລາກູ້ຢືມ*

| | *31/12/2023* *ພັນກີບ* | *31/12/2022* *ພັນກີບ* |
|---|---|---|
| ເງິນກູ້ຢືມໄລຍະສັ້ນ | 38,536,738 | 85,291,752 |
| ເງິນກູ້ຢືມໄລຍະກາງ | 2,387,297 | 3,726,347 |
| ເງິນກູ້ຢືມໄລຍະຍາວ | 40,681,777 | 51,134,064 |
| | **81,605,812** | **140,152,163** |

*ການວິເຄາະຈາກຂະແໜງເສດຖະກິດ*

| | *31/12/2023* *ພັນກີບ* | *31/12/2022* *ພັນກີບ* |
|---|---|---|
| ຂະແໜງການຄ້າ | 45,746,407 | 77,772,441 |
| ຂະແໜງການບໍລິການ | 22,046,784 | 39,597,387 |
| ຂະແໜງການອື່ນໆ | 13,812,621 | 22,782,335 |
| | **81,605,812** | **140,152,163** |

## 13. ເງິນກູ້ຢືມ ແລະ ເງິນລ່ວງໜ້າແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະສໍາລັບກິດຈະກໍາສິນເຊື່ອສຸດທິ (ຕໍ່)

### *13.2 ສ່ວນປ່ຽນແປງຂອງເງິນແຮສໍາລັບຂາດທຶນສິນເຊື່ອ*

ການເຄື່ອນໄຫວຂອງເງິນແຮສໍາລັບຂາດທຶນສິນເຊື່ອຂອງສາຂາໃນໄລຍະປີສິ້ນສຸດ 31 ທັນວາ 2023 ມີດັ່ງນີ້:

| | *ເງິນແຮສະເພາະສໍາລັບເງິນກູ້ທີ່ບໍ່ເກີດດອກອອກຜົນ ("NPL")* | *ເງິນແຮສໍາລັບໜີ້ຖອນເອົາໃຈໃສ່* | *ເງິນແຮທົ່ວໄປສໍາລັບເງິນກູ້ປົກກະຕິ ("PL")* | *ລວມ* |
|---|---|---|---|---|
| | *ພັນກີບ* | *ພັນກີບ* | *ພັນກີບ* | *ພັນກີບ* |
| **ຍອດເຫຼືອນະວັນທີ 31 ທັນວາ 2022** | **-** | **1,298,036** | **484,422** | **1,782,458** |
| ເງິນແຮສຸດທິທີ່ຫັກ/(ເກັບຄືນ) ເປັນລາຍຈ່າຍພາຍໃນປີ | 188,484 | (1,245,427) | (234,006) | (1,290,949) |
| ສ່ວນຜິດດ່ຽງໃນອັດຕາແລກປ່ຽນ | (3,510) | 19,255 | 140,927 | 156,672 |
| **ຍອດເຫຼືອນະວັນທີ 31 ທັນວາ 2023** | **184,974** | **71,864** | **391,343** | **648,181** |

ລາຍລະອຽດຂອງການຈັດຊັ້ນເງິນກູ້ ແລະ ເງິນແຮ ນະວັນທີ 31 ທັນວາ 2023 ມີດັ່ງຕໍ່ໄປນີ້:

| *ການຈັດປະເພດ* | *ຍອດເຫຼືອເງິນກູ້ ພັນກີບ* | *ເງິນແຮສະເພາະ ພັນກີບ* | *ເງິນແຮທົ່ວໄປ ພັນກີບ* | *ລວມເງິນແຮ ພັນກີບ* |
|---|---|---|---|---|
| ໜີ້ປົກກະຕິ | 78,268,554 | - | 391,343 | 391,343 |
| ໜີ້ຖອນເອົາໃຈໃສ່ | 2,412,389 | 71,864 | - | 71,864 |
| ໜີ້ຕໍ່າກວ່າມາດຕະຖານ | 924,869 | 184,974 | - | 184,974 |
| ໜີ້ສົງໄສ | - | - | - | - |
| ໜີ້ສູນ | - | - | - | - |
| ລວມ | **81,605,812** | **256,838** | **391,343** | **648,181** |

## 14. ຊັບສິນບັດຄົງທີ່ ແລະ ສິດໃນການນໍາໃຊ້ຊັບສິນ

### *14.1 ຊັບສິນບັດຄົງທີ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ມີຕົວຕົນພາຍໃນປີສິ້ນສຸດວັນທີ 31 ທັນວາ 2023 ມີດັ່ງນີ້:

| | *ອາຄານ ແລະ ການປັບປຸງ*<br>*ພັນກີບ* | *ອຸປະກອນຫ້ອງການ*<br>*ພັນກີບ* | *ເຟີນີເຈີ ແລະ ສິ່ງຕິດຕັ້ງ*<br>*ພັນກີບ* | *ອຸປະກອນຄອມພິວເຕີ*<br>*ພັນກີບ* | *ພາຫະນະ*<br>*ພັນກີບ* | *ລວມ*<br>*ພັນກີບ* |
|---|---|---|---|---|---|---|
| **ຕົ້ນທຶນ:** | | | | | | |
| ນະວັນທີ 31 ທັນວາ 2022 | 11,572,564 | 829,256 | 849,940 | 3,509,828 | 855,971 | 17,617,559 |
| ຊື້ເພີ່ມພາຍໃນປີ | - | 183,078 | - | 47,508 | - | 230,586 |
| ນະວັນທີ 31 ທັນວາ 2023 | 11,572,564 | 1,012,334 | 849,940 | 3,557,336 | 855,971 | 17,848,145 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | | |
| ນະວັນທີ 31 ທັນວາ 2022 | 11,531,880 | 820,118 | 833,916 | 2,849,602 | 855,971 | 16,891,487 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 8,138 | 35,634 | 14,662 | 211,842 | - | 270,276 |
| ນະວັນທີ 31 ທັນວາ 2023 | 11,540,018 | 855,752 | 848,578 | 3,061,444 | 855,971 | 17,161,763 |
| **ມູນຄ່າສຸດທິຕາມບັນຊີ:** | | | | | | |
| ນະວັນທີ 31 ທັນວາ 2022 | 40,684 | 9,138 | 16,024 | 660,226 | - | 726,072 |
| ນະວັນທີ 31 ທັນວາ 2023 | 32,546 | 156,582 | 1,362 | 495,892 | - | 686,382 |

## 14. ຊັບສິນບັດຄົງທີ່ ແລະ ສິດໃນການນໍາໃຊ້ຊັບສິນ (ຕໍ່)

### *14.2 ຊັບສິນບັດຄົງທີ່ບໍ່ມີຕົວຕົນ*

ການເຄື່ອນໄຫວຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນພາຍໃນປີສິ້ນສຸດວັນທີ 31 ທັນວາ 2023 ມີດັ່ງລຸ່ມນີ້:

| | *ຊັອບແວຄອມພິວເຕີ* |
|---|---|
| | *ພັນກີບ* |
| **ຕົ້ນທຶນ:** | |
| ນະວັນທີ 31 ທັນວາ 2022 | 1,807,047 |
| ນະວັນທີ 31 ທັນວາ 2023 | 1,807,047 |
| **ຄ່າເສື່ອມສະສົມ:** | |
| ນະວັນທີ 31 ທັນວາ 2022 | 1,740,314 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 34,703 |
| ນະວັນທີ 31 ທັນວາ 2023 | 1,775,017 |
| **ມູນຄ່າສຸດທິຕາມບັນຊີ:** | |
| ນະວັນທີ 31 ທັນວາ 2022 | 66,733 |
| ນະວັນທີ 31 ທັນວາ 2023 | 32,030 |

### *14.3 ຊັບສິນບັດພວມດໍາເນີນງານ*

| | *31/12/2023* | *31/12/2022* |
|---|---|---|
| | *ພັນກີບ* | *ພັນກີບ* |
| ຊັບສິນບັດຄົງທີ່ມີຕົວຕົນ | - | 147,616 |
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 413,570 | 347,972 |
| | **413,570** | **495,588** |

## 14. ຊັບສິນບັດຄົງທີ່ ແລະ ສິດນໍາໃຊ້ຊັບສິນ (ຕໍ່)

### *14.4 ສິດໃນການນໍາໃຊ້ຊັບສິນ*

| | *ສິດໃນການນໍາໃຊ້ຊັບສິນ*<br>*ພັນກີບ* |
|---|---|
| **ຕົ້ນທຶນ:** | |
| ນະວັນທີ 1 ມັງກອນ 2023 | 9,833,056 |
| ນະວັນທີ 31 ທັນວາ 2023 | 9,833,056 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | |
| ນະວັນທີ 1 ມັງກອນ 2023 | 3,323,348 |
| ຄ່າຫຼຸ້ຍຫ້ຽນພາຍໃນປີ | 1,107,783 |
| ນະວັນທີ 31 ທັນວາ 2023 | 4,431,131 |
| **ມູນຄ່າສຸດທິຕາມບັນຊີ:** | |
| ນະວັນທີ 1 ມັງກອນ 2023 | 6,509,708 |
| ນະວັນທີ 31 ທັນວາ 2023 | 5,401,925 |

ການກໍານົດໄວ້ຂ້າງລຸ່ມນີ້ແມ່ນຈໍານວນຍອດຍົກມາຂອງພັນທະໜີ້ສິນຂອງສັນຍາເຊົ່າຊື້ (ໄດ້ລວມຢູ່ພາຍໃຕ້ 'ໜີ້ຕ້ອງສົ່ງອື່ນໆ' ທີ່ຕ້ອງຊໍາລະໃນບົດອະທິບາຍຊ້ອນທ້າຍເລກທີ 19) ແລະ ການເຄື່ອນໄຫວສໍາລັບປີສິ້ນສຸດ:

| | *2023*<br>*ພັນກີບ* | *2022*<br>*ພັນກີບ* |
|---|---|---|
| **ນະວັນທີ 1 ມັງກອນ** | **10,351,745** | **8,629,451** |
| ໜີ້ຕ້ອງສົ່ງດອກເບ້ຍ | 164,443 | 190,469 |
| ການຊໍາລະ | (1,963,884) | (2,704,733) |
| ສ່ວນຜິດດ່ຽງໃນອັດຕາແລກປ່ຽນ | 1,960,119 | 4,236,558 |
| **ນະວັນທີ 31 ທັນວາ** | **10,512,423** | **10,351,745** |

## 15. ຊັບສິນອື່ນໆ

| | 31/12/2023<br>*ພັນກີບ* | 31/12/2022<br>*ພັນກີບ* |
|---|---|---|
| ລາຍຈ່າຍລ່ວງໜ້າລໍຖ້າການແບ່ງສ່ວນ | 385,748 | 327,090 |
| ອາກອນກໍາໄລຈ່າຍລ່ວງໜ້າ (ບົດອະທິບາຍເລກທີ 18.2) | 4,065,324 | 4,065,324 |
| ເຄື່ອງໃຊ້ຫ້ອງການໃນສາງ | 250,622 | 219,760 |
| ອື່ນໆ | 328,964 | 120,908 |
| | **5,030,658** | **4,733,082** |

## 16. ໜີ້ຕ້ອງສົ່ງທະນາຄານ

### *16.1 ເງິນຝາກກະແສລາຍວັນ*

| | 31/12/2023<br>*ພັນກີບ* | 31/12/2022<br>*ພັນກີບ* |
|---|---|---|
| ຍອດເຫຼືອຂອງທະນາຄານຕ່າງປະເທດ | | |
| ທະນາຄານ ເມແບັງ, ສໍານັກງານໃຫຍ່ | 18,928,429 | 16,505,228 |
| | **18,928,429** | **16,505,228** |

## 17. ໜີ້ຕ້ອງສົ່ງໃຫ້ລູກຄ້າ

ລາຍລະອຽດຂອງມູນຄ່າໜີ້ຕ້ອງສົ່ງໃຫ້ລູກຄ້າ ນະວັນທີ 31 ທັນວາ 2023 ມີດັ່ງນີ້:

| | *31/12/2023*<br>*ພັນກີບ* | *31/12/2022*<br>*ພັນກີບ* |
|---|---|---|
| ເງິນຝາກກະແສລາຍວັນ | **30,136,350** | **20,616,446** |
| - ສະກຸນເງິນກີບ | 5,649,007 | 3,867,549 |
| - ສະກຸນເງິນຕາຕ່າງປະເທດ | 24,487,343 | 16,748,897 |
| ເງິນຝາກປະຢັດ | **41,587,590** | **30,746,487** |
| - ສະກຸນເງິນກີບ | 1,594,853 | 3,544,868 |
| - ສະກຸນເງິນຕາຕ່າງປະເທດ | 39,992,737 | 27,201,619 |
| ເງິນຝາກມີກໍານົດ | **20,720,194** | **25,576,268** |
| - ສະກຸນເງິນກີບ | 363,192 | 399,607 |
| - ສະກຸນເງິນຕາຕ່າງປະເທດ | 20,357,002 | 25,176,661 |
| ໜີ້ຕ້ອງສົ່ງອື່ນໆ | **2,370,652** | **73,216,635** |
| - ສະກຸນເງິນກີບ | 4,728 | 4,728 |
| - ສະກຸນເງິນຕາຕ່າງປະເທດ | 2,365,924 | 73,211,907 |
| | **94,814,786** | **150,155,836** |

ອັດຕາດອກເບ້ຍໜີ້ຕ້ອງສົ່ງລູກຄ້າມີດັ່ງຕໍ່ໄປນີ້:

| | *2023*<br>*ອັດຕາດອກເບ້ຍ*<br>*ຕໍ່ປີ* | *2022*<br>*ອັດຕາດອກເບ້ຍ*<br>*ຕໍ່ປີ* |
|---|---|---|
| ເງິນຝາກກະແສລາຍວັນສະກຸນເງິນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນສະກຸນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດສະກຸນເງິນກີບ | 1.89 – 2.64 | 1.89 |
| ເງິນຝາກປະຢັດສະກຸນເງິນໂດລາ | 1.75 – 2.50 | 1.75 |
| ເງິນຝາກປະຢັດສະກຸນເງິນບາດ | 0.55 - 1.30 | 1.75 |
| ເງິນຝາກມີກໍານົດສະກຸນເງິນກີບ | 3.16 - 6.71 | 3.16 - 6.77 |
| ເງິນຝາກມີກໍານົດສະກຸນເງິນຕາຕ່າງປະເທດ | 3.20 - 5.25 | 2.65 - 5.00 |

## 18. ອາກອນ

### *18.1 ອາກອນກຳໄລຈ່າຍລ່ວງໜ້າ ແລະ ໜີ້ຕ້ອງສົ່ງອາກອນກຳໄລ*

| | *31/12/2023*<br>*ພັນກີບ* | *31/12/2022*<br>*ພັນກີບ* |
|---|---|---|
| ອາກອນກຳໄລຈ່າຍລ່ວງໜ້າ | (4,065,324) | (4,065,324) |
| ໜີ້ຕ້ອງສົ່ງອາກອນກຳໄລ | 17,409,975 | - |
| | **13,344,651** | **(4,065,324)** |

### *18.2 ອາກອນກຳໄລ*

ຄັງແຮແມ່ນຖືກສ້າງຂຶ້ນສຳລັບອາກອນກຳໄລຕາມກຳໄລຂອງປີປັດຈຸບັນ, ໂດຍອີງຕາມກົດໝາຍສ່ວຍສາອາກອນວ່າດ້ວຍການເກັບອາກອນພາຍໃນ ສປປ ລາວ. ສາຂາມີພັນທະຕ້ອງຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍສ່ວຍອາກອນສະບັບປັບປຸງເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນສັກສິດຕັ້ງແຕ່ວັນທີ 1 ມັງກອນ 2020.

ລາຍລະອຽດຄັງແຮອາກອນກຳໄລສຳລັບປີ 2023 ແລະ 2022 ມີດັ່ງລຸ່ມນີ້:

| | *2023*<br>*ພັນກີບ* | *2022*<br>*ພັນກີບ* |
|---|---|---|
| ກຳໄລ/(ຂາດທຶນ)ກ່ອນຫັກອາກອນຕາມລະບົບການບັນຊີລາວ | 94,894,453 | (1,185,501) |
| ຫັກ: ລາຍການທີ່ບໍ່ຖືເປັນລາຍຮັບ | (705,487,443) | - |
| ບວກ: ລາຍການທີ່ບໍ່ໃຫ້ຫັກເປັນລາຍຈ່າຍ | 706,233,291 | (637,792) |
| ຂາດທຶນສະສົມທາງອາກອນ | (8,590,427) | - |
| **ກຳໄລ/(ຂາດທຶນ)ທາງອາກອນ** | **87,049,874** | **(1,823,293)** |
| ລາຍຈ່າຍອາກອນກຳໄລ 20% ຂອງລາຍໄດ້ທີ່ຕ້ອງເສຍອາກອນ | 17,409,975 | - |
| **ລາຍຈ່າຍອາກອນກຳໄລໃນປີປັດຈຸບັນ** | | |
| ອາກອນກຳໄລເກັບຄືນໃນຕົ້ນປີ | (4,065,324) | (4,065,324) |
| **ອາກອນກຳໄລຕ້ອງຈ່າຍ/(ເກັບຄືນ)ທ້າຍປີ** | **13,344,651** | **(4,065,324)** |

## 18. ອາກອນ (ຕໍ່)

### *18.2 ອາກອນກໍາໄລ* (ຕໍ່)

ການແຈ້ງອາກອນຂອງສາຂາຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ. ຍ້ອນວ່າການນໍາໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆ ແມ່ນມີຫຼາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫລາຍຢ່າງ, ມູນຄ່າທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

*ຂາດທຶນທາງອາກອນຍົກໄປຫັກຕໍ່*

ການຂາດທຶນທາງອາກອນສໍາລັບປີ 2020, 2021 ແລະ 2022 ອີງຕາມກົດໝາຍສ່ວຍສາອາກອນສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ມາດຕາ 23, ສໍາລັບການຂາດທຶນປະຈໍາປີທີ່ໄດ້ຮັບການຢັ້ງຢືນຈາກອົງການກວດສອບ ຫຼື ບໍລິສັດກວດສອບອິດສະຫຼະ ແລະ ຖືກຮັບຮູ້ຈາກເຈົ້າໜ້າທີ່ສວຍສາອາກອນ. ພາຍໃຕ້ກົດຫມາຍອາກອນໃນປັດຈຸບັນ, ສາຂາມີສິດທີ່ຈະຍົກຍອດຂາດທຶນທາງອາກອນເພື່ອຫັກລົບກັບອາກອນກໍາໄລຕ້ອງຈ່າຍທີ່ເກີດຂຶ້ນພາຍໃນ 5 ປີຫຼັງຈາກປີທີ່ເກີດການຂາດທຶນ.

ນະວັນທີຂອງໃບລາຍງານການເງິນສະບັບນີ້, ສາຂາບໍ່ມີຍອດການຂາດທຶນສະສົມທາງອາກອນ (31 ທັນວາ 2022: 12,020,408 ພັນກີບ) ສາມາດນໍາຍົກຍອດຂາດທຶນທາງອາກອນເພື່ອຫັກລົບກັບອາກອນກໍາໄລຕ້ອງມອບໃນອະນາຄົດ. ລາຍລະອຽດມີດັ່ງນີ້:

| *ປີ* | *ສາມາດຍົກໄປຫັກຕໍ່* | *ຂາດທຶນເພີ່ມທາງອາກອນທີ່ເກີດຂຶ້ນພາຍໃນປີ*<br>*ພັນກີບ* | *ນໍາໃຊ້ພາຍໃນປີ*<br>*ພັນກີບ* | *ນໍາໃຊ້ບໍ່ໄດ້ໃນປີ*<br>*ພັນກີບ* | *ຈໍານວນທີ່ບໍ່ໄດ້ໃຊ້ແຕ່ບໍ່ມີສິດນໍາໃຊ້ໃນປີໜ້າ*<br>*ພັນກີບ* | *ມີສິດເສຍອາກອນທີ່ບໍ່ໄດ້ໃຊ້ໃນທ້າຍປີ*<br>*ພັນກີບ* |
|---|---|---|---|---|---|---|
| 2020 (*) | 2025 | (4,667,869) | - | - | - | (4,667,869) |
| 2021 (*) | 2026 | (5,529,241) | - | - | - | (5,529,241) |
| 2022 (*) | 2027 | (1,823,293) | - | - | - | (1,823,293) |
| 2023 (*) | 2028 | - | 8,590,427 | 3,429,976 | - | 12,020,403 |
| | | **(12,020,403)** | **8,590,427** | **3,429,976** | **-** | **-** |

(*) ນະວັນທີຂອງເອກະສານລາຍງານການເງິນເຫຼົ່ານີ້, ການໄລ່ລຽງອາກອນໄດ້ຖືກສະຫຼຸບສໍາລັບປີທີ່ສຸດວັນທີ 31 ທັນວາ 2020, 31 ທັນວາ 2021, 31 ທັນວາ 2022 ແລະ 31 ທັນວາ 2023 ຍັງບໍ່ທັນໄດ້ຖືກສະຫຼຸບຈາກເຈົ້າໜ້າທີ່ສ່ວຍສາອາກອນ.

## 19. ໜີ້ຕ້ອງສົ່ງອື່ນໆ

| | 31/12/2023<br>*ພັນກີບ* | 31/12/2022<br>*ພັນກີບ* |
|---|---|---|
| ໜີ້ທີ່ຕ້ອງສົ່ງໃຫ້ພາກສ່ວນພາຍນອກ | 1,638,697 | 1,294,977 |
| ໜີ້ຕ້ອງສົ່ງໃຫ້ກັບພະນັກງານ | 2,506,426 | 1,783,153 |
| ໜີ້ຕ້ອງສົ່ງອື່ນໆ | 231,904 | 126,454 |
| ໜີ້ຕາມສັນຍາເຊົ່າ | 10,512,423 | 10,351,745 |
| | **14,889,450** | **13,556,329** |

## 20. ທຶນຈົດທະບຽນທີ່ຖອກແລ້ວ

ການເຄື່ອນໄຫວຂອງທຶນຈົດທະບຽນທີ່ຖອກແລ້ວພາຍໃນປີແມ່ນມີດັ່ງລຸ່ມນີ້:

| | 2023<br>*ພັນກີບ* | 2022<br>*ພັນກີບ* |
|---|---|---|
| ຍອດຍົກມາ | 200,783,129 | 200,783,129 |
| **ຍອດເຫຼືອທ້າຍປີ** | **200,783,129** | **200,783,129** |

ອີງຕາມກົດໝາຍວ່າດ້ວຍ ທະນາຄານທຸລະກິດ ເລກທີ 89/ສພຊ ອອກໂດຍສະພາແຫ່ງຊາດ ໃນວັນທີ 17 ກໍລະກົດ 2023 ແລະ ມີຜົນສັກສິດຕັ້ງແຕ່ວັນທີ 15 ກັນຍາ 2023, ທຸກສາຂາທະນາຄານຕ່າງປະເທດໃນ ສປປ ລາວ ຕ້ອງໄດ້ປະກອບເງິນລົງທຶນຈົດທະບຽນຕໍ່າສຸດທຽບເທົ່າ 600,000,000,000 ກີບ.

ອີງຕາມໜັງສືແຈ້ງຕອບຈາກ ທຫລ ເລກທີ 1036/ກຄທ ລົງວັນທີ 27 ທັນວາ 2023, ທຫລ ຮັບຮູ້ເລື່ອງການເລື່ອນໄລຍະເວລາການເພີ່ມເງິນລົງທຶນຂອງສາຂາ ຕາມທີ່ໄດ້ກໍານົດໃນເງື່ອນໄຂຂອງສັນຍາເງິນກູ້ຢືມ ລົງວັນທີ 18 ກັນຍາ 2023 ລະຫວ່າງ ທະນາຄານ ເມແບັງ ສາຂາລາບວນ (Maybank International Labuan Branch) ກັບ ກະຊວງການເງິນ ຂອງ ສປປ ລາວ.

## 21. ເງິນສົດ ແລະ ທຽບເທົ່າເງິນສົດ

| | 31/12/2023<br>*ພັນກີບ* | 31/12/2022<br>*ພັນກີບ* |
|---|---|---|
| ເງິນສົດໃນຄັງ | 6,309,546 | 3,899,811 |
| ເງິນຝາກກະແສລາຍວັນຢູ່ ທຫລ | 166,287,198 | 108,883,392 |
| ເງິນຝາກກະແສລາຍວັນຢູ່ ທະນາຄານອື່ນ | 5,013,325 | 3,628,234 |
| | **177,610,069** | **116,411,437** |

## 22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນອື່ນທີ່ກ່ຽວຂ້ອງ ແມ່ນລວມທຸກລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນ ເຊິ່ງມີສາຍພົວພັນກັບສາຂາ. ພາກສ່ວນດັ່ງກ່າວແມ່ນຈະມີສ່ວນກ່ຽວຂ້ອງກັບສາຂາຖ້າວ່າ :

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ເຊິ່ງພາກສ່ວນດັ່ງກ່າວ:

- ມີການຄວບຄຸມ, ຖືກຄວບຄຸມໂດຍ ຫຼື ພາຍໃຕ້ການຄວບຄຸມໂດຍທະນາຄານ (ໃນນີ້ລວມມີ ທະນາຄານແມ່, ສາຂາ ແລະ ສະມາຊິກຂອງສາຂາ)
- ມີຜົນປະໂຫຍດນຳກັນກັບສາຂາ ເຊິ່ງມີອິດທິພົນທີ່ສຳຄັນຕໍ່ກັບສາຂາ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມສາຂາ;

(ຂ) ພາກສ່ວນດັ່ງກ່າວແມ່ນມີຮຸ້ນສ່ວນນຳສາຂາ;

(ຄ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກຄົນສຳຄັນຂອງ ຜູ້ບໍລິຫານຫຼັກຂອງສາຂາ ຫຼື ທະນາຄານແມ່;

(ງ) ພາກສ່ວນທີ່ກ່ຽວຂ້ອງແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ກ່ຽວຂ້ອງແມ່ນຜູ້ທີ່ຄວບຄຸມສາຂາ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ມີອິດທິພົນທີ່ສຳຄັນ, ຫຼື ມີສິດອຳນາດໃນການອອກສຽງໃນຕໍ່ທະນາຄານ ທີ່ດຳເນີນທຸລະກິດ, ໂດຍທາງກົງ ຫຼື ທາງອ້ອມ, ທຸກໆພາກສ່ວນທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ກ່ຽວຂ້ອງ ເປັນຜົນປະໂຫຍດຫຼັງອອກການ ຂອງພະນັກງານໃນສາຂາ ຫຼື ທະນາຄານອື່ນໆທີ່ມີສາຍພົວພັນກັບສາຂາ.

**22. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)**

ຍອດເຫຼືອກັບພາກສ່ວນທີ່ກ່ຽວຂ້ອງ ນະວັນທີ 31 ທັນວາ 2023 ແລະ ວັນທີ 31 ທັນວາ 2022 ແມ່ນມີດັ່ງນີ້:

| | *31/12/2023 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ພັນກີບ* | *31/12/2022 ໜີ້ຕ້ອງຮັບ/ (ໜີ້ຕ້ອງສົ່ງ) ພັນກີບ* |
|---|---|---|
| **ເງິນຝາກລະຫວ່າງສາຂາກັບທະນາຄານ ເມແບັງ - ສຳນັກງານໃຫຍ່** | | |
| ບັນຊີຂອງທະນາຄານທີ່ເປີດກັບສາຂາ | (18,928,429) | (16,505,228) |
| ເງິນຝາກມີກຳນົດ | 67,110,684 | 31,510,770 |
| **ເງິນຝາກລະຫວ່າງສາຂາກັບທະນາຄານ ເມແບັງ - ສາຂານິວຢອກ** | | |
| ບັນຊີທີ່ສາຂາເປີດກັບທະນາຄານ | 3,714,070 | 2,610,094 |

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີມີດັ່ງນີ້:

| | *2023 ພັນກີບ* | *2022 ພັນກີບ* |
|---|---|---|
| ລາຍຮັບດອກເບ້ຍສຳລັບເງິນຝາກມີກຳນົດຈາກ ທະນາຄານ ເມແບັງ ສຳນັກງານໃຫຍ່ | (2,029,452) | (383,760) |
| | **(2,029,452)** | **(383,760)** |

***ລາຍການເຄື່ອນໄຫວກັບຄະນະບໍລິຫານຫຼັກຂອງສາຂາ***

ຄ່າຕອບແທນຂອງສະມາຊິກຄະນະບໍລິຫານມີດັ່ງນີ້:

| | *31/12/2023 ພັນກີບ* | *31/12/2022 ພັນກີບ* |
|---|---|---|
| ເງິນເດືອນ | 2,852,301 | 2,572,094 |
| ໂບນັສ ແລະ ຜົນປະໂຫຍດອື່ນໆ | 528,623 | 701,929 |
| | **3,380,924** | **3,274,023** |

**23. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະການເງິນ**

ບໍ່ມີບັນຫາ ຫຼື ສະຖານະການທີ່ເກີດຂຶ້ນຕັ້ງແຕ່ວັນທີ 31 ທັນວາ 2023 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນຂອງສາຂາ.

ກະກຽມໂດຍ:

ທ່ານ ສິດທິພົນ ສີສຸດາຈັນ
ຫົວໜ້າພະແນກການເງິນ

ກວດຄືນໂດຍ:

ທ່ານ Tan Tee Huat
ຜູ້ອໍານວຍການໃຫຍ່

ທະນາຄານ ມາເລຍັນ ເບີຫັດ ສາຂາລາວ Malayan Banking Berhad Lao Branch

ນະຄອນຫຼວງວຽງຈັນ, ສປປ ລາວ

11 ເມສາ 2024